ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0864/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 11/04/2022

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021

- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝວິສາມັນຄັ້ງທີ 1/2022 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 14 ກຸມພາ 2022.
- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝວິສາມັນຄັ້ງທີ 2/2022 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 05 ເມສາ 2022.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("**ບໍລິສັດ**") ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບວ່າ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ຈະໄດ້ຈັດຂຶ້ນເປັນ 02 ລະບົບຄື: ລະບົບແບບຊ້ອງໜ້າ ທີ່ຫ້ອງປະຊຸມຊັ້ນ 01 ສຳນັກງານໃຫຍ່ລັດວິສາຫະກິດໄຟຟ້າລາວ ແລະ ລະບົບແບບອອນລາຍ. ແລະ ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ໃນວັນທີ **27 ເມສາ 2022** ເວລາ **15:00** ໂມງ. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມແບບອອນລາຍ (ລາຍລະອຽດໃນເອກະສານຄັດຕິດທີ 7) ແລະ ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າປະຊຸມແບບຊ້ອງໜ້າແມ່ນ (ເລີ່ມລົງທະບຽນເວລາ **13:30** ໂມງ), ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ຜ່ານເວັບໄຊທ໌ຂອງບໍລິສັດ (www.edlgen.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021, ໃນວັນທີ **10 ມີນາ 2022**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ

ບຸນທຽ ສີນໄຊວໍລະວົງ

ຖະໜົນມິດຕະພາບລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

<u>ເອກະສານຄັດຕິດ:</u>

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021.
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020.
3. ລາຍງານການເງິນປະຈຳປີ 2021.
4. ຊີວະປະຫວັດຫຍໍ້ ຂອງຄະນະສະພາບໍລິຫານຜູ້ໃໝ່.
5. ໃບມອບສັນທະ.
6. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.
7. ຄຳແນະນຳຂັ້ນຕອນການເຂົ້າກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ຜ່ານລະບົບອອນລາຍ ແລະ ໃຫ້ລົງທະບຽນກ່ອນວັນທີ 25 ເມສາ 2022.
8. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021.

<u>ໝາຍເຫດ</u>:

1. ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໄດ້ຂະຫຍາຍເປັນວົງກວ້າງໃນຫຼາຍປະເທດ. ເພື່ອປ້ອງກັນ, ສະກັດກັ້ນບໍ່ໃຫ້ມີການຕິດເຊື້ອ ແລະ ແຜ່ລະບາດ, ຂໍແຈ້ງມາຍັງບັນດາທ່ານຜູ້ຖືຮຸ້ນຊາບຄື:

1.1 ຜູ້ຖືຮຸ້ນທຸກໆທ່ານ ສາມາດດາວໂຫຼດເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດໃນເວັບໄຊທ໌ ຂອງບໍລິສັດ ແລະ ເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ ຫຼື ໄປຮັບເອົາໜັງສືເຊີນພ້ອມເອກະສານຄັດຕິດຢູ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +85621 454361-4. ເລີ່ມແຕ່ວັນທີ **11 ເມສາ 2022.**

1.2 ຜູ້ຖືຮຸ້ນທີ່ມີຈຸດປະສົງຈະເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍສາມາດສົ່ງຄຳຖາມທີ່ຕິດພັນກັບວາລະກອງປະຊຸມມາກ່ອນບໍ່ໃຫ້ເກີນວັນທີ **25 ເມສາ 2022** ຜ່ານອີເມວ: agm-egm@edlgen.com.la ແລະ ບໍລິສັດຂໍແຈ້ງໃຫ້ຜູ້ຖືຮຸ້ນທີ່ປະຊຸມຜ່ານລະບົບອອນລາຍນັ້ນຊາບວ່າ ບໍ່ໄດ້ສິດໃຫ້ຕັ້ງຄຳຖາມໃນເວລາທີ່ດຳເນີນກອງປະຊຸມ.

1.3 ສະເໜີຜູ້ຖືຮຸ້ນມອບໝາຍໃຫ້ກຳມະການອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະຕາມ **<u>ເອກະສານຄັດຕິດ 5</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ ແລະ ໝາຍ (✔) ເພື່ອເລືອກເອົາກຳມະການສະພາບໍລິຫານອິດສະຫຼະ ຂອງບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບມາທາງທີ່ຢູ່ອີເມລຂອງບໍລິສັດ: agm-egm@edlgen.com.la ຫຼື ໄປສະນີເຖິງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນຊັ້ນ 07, **ພະແນກເລຂານຸການບໍລິສັດ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ **ກະລຸນາສົ່ງກ່ອນວັນທີ 27 ເມສາ 2022**.

2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານໃນກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
4. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ທ່ານສາມາດສອບຖາມ ທ່ານ ອິນປັນ ບໍລິຫານ ໂທ: (856-20) 5559 2263 ແລະ ທ່ານ ພຸດທະສອນ ອິນທະປັນຍາ ໂທ: (856-20) 29 898989 ໃນໂມງລັດຖະການ.

ວາລະທີ 1. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານຜູ້ໃໝ່ເພື່ອປ່ຽນແທນຜູ້ເກົ່າ ທີ່ຄົບອາຍຸການ, ຜູ້ທີ່ໄປຮັບໜ້າທີ່ໃໝ່ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຄືນໃໝ່.

ລາຍລະອຽດ:

ອີງຕາມບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ສະບັບລົງວັນທີ 22 ມິຖຸນາ 2020 ວາລະທີ 8, ວັກທີ 4 ໄດ້ລະບຸໄວ້ວ່າ ອາຍຸການຂອງບັນດາສະພາບໍລິຫານຂອງບໍລິສັດທັງໝົດ ມີກຳນົດ 2 ປີ ໂດຍເລີ່ມນັບແຕ່ວັນທີກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເປັນຕົ້ນໄປ. ຊຶ່ງມາຮອດປັດຈຸບັນ ເຫັນວ່າອາຍຸການຂອງບັນດາສະພາບໍລິຫານຈຳນວນໜຶ່ງໄດ້ປະຕິບັດວຽກງານຄົບວາລະ 02 ປີແລ້ວ.

ຄະນະກຳມະການຄັດເລືອກໄດ້ຄົ້ນຄວ້າເອົາບຸກຄະລາກອນຈາກຫຼາຍພາກສ່ວນທີ່ມີຄຸນວຸດທິການສຶກສາສູງ, ມີຄວາມຮູ້ຄວາມສາມາດ, ມີປະສົບການໃນການດຳເນີນທຸລະກິດ ແລະ ການປະຕິບັດວຽກງານ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບວາລະແລ້ວ, ໂດຍເລີ່ມຕັ້ງແຕ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ເປັນຕົ້ນໄປ (ກຳນົດ 02 ປີ). ຊີວະປະຫວັດຫຍໍ້ຂອງບັນດາສະພາບໍລິຫານແຕ່ລະທ່ານໄດ້ມີລາຍລະອຽດໃນເອກະສານຄັດຕິດ ທີ່ໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ.

ຄະນະສະພາບໍລິຫານຜູ້ໃໝ່ ມີລາຍຊື່ດັ່ງນີ້:

1. ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ	ຮອງລັດຖະມົນຕີກະຊວງການເງິນ, ເປັນປະທານສະພາບໍລິຫານ;
2. ທ່ານ ສົມພິດ ແກ້ວວິຈິດ	ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່, ເປັນກຳມະການສະພາບໍລິຫານ;
3. ທ່ານ ນາງ ມະນີວອນ ພົນອາມາດ	ຮອງຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ, ເປັນກຳມະການສະພາບໍລິຫານ;
4. ທ່ານ ຊົນລະວິດ ວິນິດໄສ	ຜູ້ອຳນວຍການ ບໍລິສັດ ຣາຊ໌ລາວ ບໍລິການ ຈຳກັດ, ເປັນກຳມະການສະພາບໍລິຫານ;
5. ທ່ານ ຄຳມູນ ວິພົງໄຊ	ອາດີດຮອງລັດຖະມົນຕີ ກະຊວງພາຍໃນ, ເປັນກຳມະການສະພາບໍລິຫານອິດສະຫຼະ;
6. ທ່ານ ຄຳແກ້ວ ວິສີສົມບັດ	ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ, ເປັນກຳມະການສະພາບໍລິຫານອິດສະຫຼະ;
7. ທ່ານ ປອ. ພັນປະກິດ ອ່ອນພັນດາລາ	ຮອງຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫ້ອງວ່າການສູນກາງພັກ, ເປັນກຳມະການສະພາບໍລິຫານອິດສະຫຼະ.

ສະເໜີກຳນົດລາຍຊື່ຜູ້ອຳນວຍການ ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. ປະທານສະພາບໍລິຫານ ຫລື ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ລົງລາຍເຊັນ ແລະ ປະທັບກາບໍລິສັດແຕ່ພຽງຜູ້ດຽວ; ຫລື
2. ໃຫ້ຜູ້ອຳນວຍການອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ເປັນຕົ້ນໄປ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາຄະນະສະພາບໍລິຫານຜູ້ໃໝ່ ຂອງບໍລິສັດ ລວມທັງການມອບອຳນາດດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020.

ລາຍລະອຽດ:

ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ໄດ້ຈັດຂຶ້ນໃນວັນທີ **09 ເມສາ 2021**, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວ ມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020, ວັນທີ 09 ເມສາ 2021.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດ ໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3. ພິຈາລະນາ ແລະ ອະນຸມັດລາຍງານການເງິນ 6 ເດືອນຕົ້ນປີ 2021 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2021 ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2021 ລວມທັງລາຍງານການເງິນຂອງບໍລິສັດ ປີ 2021, ແຜນການດຳເນີນທຸລະກິດຂອງບໍລິສັດປີ 2022 ແລະ ວິໄສທັດ ແລະ ພາລະກິດ ຂອງບໍລິສັດ ສະບັບປັບປຸງ.

ລາຍລະອຽດ:

I. ລາຍງານການເງິນ 6 ເດືອນຕົ້ນປີ 2021

ອີງຕາມການມອບອຳນາດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ຄັ້ງວັນທີ 22 ເມສາ 2013. ການເຄື່ອນໄຫວທຸລະກິດ ຂອງບໍລິສັດໃນ 6 ເດືອນຕົ້ນປີ 2021 ບໍລິສັດມີກຳໄລສຸດທິຈຳນວນ 329,19 ຕື້ກີບ, ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ຂອງບໍລິສັດ.

ບໍລິສັດບໍ່ອະນຸມັດຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2021 ໃຫ້ຜູ້ຖືຮຸ້ນ ເນື່ອງຈາກວ່າບໍລິສັດຈະສຳຮອງເງິນສົດໄວ້ ເພື່ອຊຳລະຄືນເງິນຕົ້ນ, ດອກເບ້ຍເງິນກູ້ ລວມທັງຮຸ້ນກູ້ສະກຸນເງິນຕາຕ່າງປະເທດໃນທ້າຍປີ 2021.

II. ລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2021

ການດຳເນີນທຸລະກິດຂອງ ຜ-ຟຟລ ໃນປີ 2021 ແມ່ນໄດ້ຜະລິດກະແສໄຟຟ້າຂາຍຍົກໃຫ້ ລັດວິສາຫະກິດໄຟຟ້າລາວ (ຟຟລ) ຕາມສັນຍາຊື້-ຂາຍໄຟຟ້າ (PPA) ແລະ ດຳເນີນການຕາມກົດໝາຍແລະກົດລະບຽບຕ່າງໆ ຂອງ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຜ-ຟຟລ ມີທຶນຈົດທະບຽນ ຈຳນວນ 6.717,21 ຕື້ກີບ ແລະ ມີຮຸ້ນສາມັນ ເທົ່າກັບ 1.679.303.697 ຮຸ້ນ. ຜົນການດຳເນີນທຸລະກິດໃນປີ 2021 ສາມາດສັງລວມໄດ້ດັ່ງນີ້:

1. ກຳລັງຕິດຕັ້ງ ແລະ ການຜະລິດ:

ກຳລັງຕິດຕັ້ງທັງໝົດມີ 1.683,22 MW, ໃນນີ້ລວມມີ ເຂື່ອນໄຟຟ້າພະລັງງານນ້ຳຢູ່ໃນການຄຸ້ມຄອງ ຈຳນວນ 10 ເຂື່ອນ ລວມກຳລັງຕິດຕັ້ງ 699 MW, ການເຂົ້າຖືຮຸ້ນໃນເຂື່ອນໄຟຟ້າພະລັງງານນ້ຳ ຂອງຜູ້ຜະລິດໄຟຟ້າເອກະລາດ ຈຳນວນ 15 ເຂື່ອນ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ ຈຳນວນ 965,02 MW ແລະ ໂຄງການໄຟຟ້າພະລັງງານແສງຕາເວັນ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ ຈຳນວນ 19,2 MW.

ໃນປີ 2021, ເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ສາມາດຜະລິດພະລັງງານໄຟຟ້າໄດ້ເທົ່າກັບ **2.292,04 GWh.** ການຜະລິດຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນ ສາມາດຜະລິດໄດ້ **4.920,68 GWh** ຕາມສັດສ່ວນຖືຮຸ້ນ, ແລະ ການຜະລິດຈາກ ບໍລິສັດ ອີດີແອວ-ເຈັນ ໂຊລ່າພາວເວີ້ ຈຳກັດ ປະຕິບັດໄດ້ **27,64 GWh** ຕາມສັດສ່ວນຖືຮຸ້ນ. ດັ່ງນັ້ນ, ໃນປີ 2021 ຜ-ຟຟລ ສາມາດຜະລິດພະລັງງານໄຟຟ້າໄດ້ທັງໝົດ **7.240,36 GWh.**

2. ລາຍຮັບ ແລະ ລາຍຈ່າຍ.

ດ້ານລາຍຮັບ: ລາຍຮັບ ຂອງ ຜ-ຟຟລ ປະກອບດ້ວຍ ລາຍຮັບຈາກການຂາຍ ກະແສໄຟຟ້າ ໃຫ້ແກ່ ຟຟລ, ກຳໄລຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນບັນດາໂຄງການເຂື່ອນໄຟຟ້າຜູ້ຜະລິດໄຟຟ້າເອກະລາດ (IPPs) ແລະ ລາຍຮັບອື່ນໆ ໂດຍມີລາຍລະອຽດດັ່ງນີ້:

- ລາຍຮັບຈາກການຂາຍກະແສໄຟຟ້າ ໃຫ້ແກ່ ຟຟລ ລວມເປັນເງິນ **1.196,66** ຕື້ກີບ.
- ກຳໄລ ຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຈຳນວນ **960,72** ຕື້ກີບ.
- ລາຍຮັບອື່ນໆ ລວມເປັນເງິນ **55,29** ຕື້ກີບ.

ດັ່ງນັ້ນ, ຕົວເລກລາຍຮັບ ລວມທັງໝົດ ເທົ່າກັບ **2.212,67** ຕື້ກີບ.

ດ້ານລາຍຈ່າຍ: ລາຍຈ່າຍໃນການດຳເນີນທຸລະກິດ ປະກອບດ້ວຍ: ລາຍຈ່າຍຕົ້ນທຶນການຂາຍ, ລາຍຈ່າຍການດຳເນີນງານ, ຂາດທຶນຈາກອັດຕາແລກປ່ຽນ ແລະ ລາຍຈ່າຍທາງການເງິນ, ໂດຍມີລາຍລະອຽດດັ່ງນີ້:

- ລາຍຈ່າຍຕົ້ນທຶນການຂາຍ ຈຳນວນ **585,97** ຕື້ກີບ.
- ລາຍຈ່າຍການດຳເນີນງານ ຈຳນວນ **154,09** ຕື້ກີບ
- ຂາດທຶນຈາກອັດຕາແລກປ່ຽນ ຈຳນວນ **612,91** ຕື້ກີບ
- ລາຍຈ່າຍທາງການເງິນ ຈຳນວນ **855,82** ຕື້ກີບ

ດັ່ງນັ້ນ, ຕົວເລກລາຍຈ່າຍ ລວມທັງໝົດ ເທົ່າກັບ **2.208,79** ຕື້ກີບ.

3. ກຳໄລ

ໃນປີ 2021 ຜ-ຟຟລ ມີລາຍຮັບລວມທັງໝົດ **2.212,67** ຕື້ກີບ ແລະ ລາຍຈ່າຍລວມ **2.208,79** ຕື້ກີບ, ເຮັດໃຫ້ມີກຳໄລສຸດທິ ເທົ່າກັບ **3,88** ຕື້ກີບ.

4. ການປະຕິບັດພັນທະ ຕໍ່ລັດຖະບານ.

ຜ-ຟຟລ ໄດ້ປະຕິບັດການມອບພັນທະໃຫ້ແກ່ ລັດຖະບານ ຢ່າງເປັນປົກກະຕິ ແລະທັນເວລາ. ການມອບພັນທັນໃຫ້ແກ່ລັດຖະບານ ປະຈຳປີ 2021 ລວມມີ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10%, ອາກອນເງິນປັນຜົນ 10%, ອາກອນມູນຄ່າເພີ່ມ, ອາກອນລາຍໄດ້ຂອງບຸກຄົນ ລວມເປັນເງິນທັງໝົດ 88,75 ຕື້ກີບ.

5. ດ້ານບຸກຄະລາກອນ ແລະ ການພັດທະນາຊັບພະຍາກອນມະນຸດ.

ຜ-ຟຟລ ປະກອບມີ ຈຳນວນບຸກຄະລາກອນ ຢູ່ໃນການຄຸ້ມຄອງ ທັງໝົດ **779** ຄົນ, ຍິງ **126** ຄົນ. ໂດຍອີງຕາມວິໄສທັດ ແລະ ນະໂຍບາຍ ຕໍ່ກັບວຽກງານພັດທະນາບຸກຄະລາກອນ, ການຍົກລະດັບ ທາງດ້ານວິຊາສະເພາະ ແລະ ການຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດ ລວມທັງໝົດ 644 ຄັ້ງຄົນ.

6. ກິດຈະກຳວຽກງານສິ່ງແວດລ້ອມ-ສັງຄົມ.

ຜ-ຟຟລ ໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ເປັນພິເສດກ່ຽວກັບວຽກງານສິ່ງແວດລ້ອມແລະສັງຄົມ. ໃນປີ 2021, ຜ-ຟຟລ ໄດ້ອະນຸມັດຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ-ສັງຄົມ ໂດຍມີລາຍລະອຽດດັ່ງນີ້:

❖ ວຽກງານທາງດ້ານສິ່ງແວດລ້ອມ

1) ລົງຕິດຕາມ ແລະ ຈັດກອງປະຊຸມຮ່ວມກັບອຳນາດການປົກຄອງຂັ້ນທ້ອງຖິ່ນ ຂອງເມືອງທ່າແຕງ, ແຂວງເຊກອງ ເປັນຈຳນວນ 6.400.000 ກີບ. ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ບ້ານຫ້ວຍດຳໃໝ່ ເຊິ່ງເປັນເຂດບ້ານຈັດສັນຂອງເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່.
2) ສະໜອງງົບປະມານໃນການປັກຫຼັກໝາຍ ແລະ ກຳນົດຂອບເຂດຂອງເຂື່ອນໄຟຟ້ານ້ຳຄານ 2 ລວມມູນຄ່າ 155.670.000 ກີບ.
3) ສະໜອງງົບປະມານຈຳນວນ 27.475.000 ກີບ ເປັນຄ່າທຳນຽມ ແລະ ຄ່າບໍລິການວັດແທກທີ່ດິນຂອງເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ.
4) ໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບການສ້າງແຜນຄຸ້ມຄອງອ່າງຮັບນ້ຳ (ແຜນຊີດເຊີຍປ່າໄມ້) ຮ່ວມກັບ ກົມປ່າໄມ້, ກະຊວງ ກະສິກຳ ແລະ ປ່າໄມ້, ຂອງເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ຕາມເງື່ອນໄຂຂອງ ບົດພັນທະສິ່ງແວດລ້ອມ ເຊິ່ງເປັນເອກະສານຊ້ອນທ້າຍຂອງສັນຍາສຳປະທານໂຄງການ ເປັນຈຳນວນ 29.680.000 ກີບ.
5) ເນື່ອງໃນວັນປ່ອຍປາ, ອະນຸລັກສັດນ້ຳ ແລະ ສັດປ່າແຫ່ງຊາດ 13 ກໍລະກົດ 2021 ເຂື່ອນໄຟຟ້ານ້ຳງື່ມ -1 ປະກອບສ່ວນແນວພັນປາ ຈຳນວນ 10.000 ໂຕ ແກ່ອຳນາດການປົກຄອງແຂວງວຽງຈັນ ເພື່ອປ່ອຍລົງສູ່ແມ່ນ້ຳງື່ມ ທ້າຍເຮືອນຈັກຂອງເຂື່ອນໄຟຟ້ານ້ຳງື່ມ 1, ທີ່ເມືອງ ແກ້ວອຸດົມ ແຂວງ ວຽງຈັນ.
6) ສະໜອງງົບປະມານສົມທົບທຶນ 3.420.000 ກີບ ປະກອບເຂົ້າໃນຄະນະຕິດຕາມການບໍລິຫານນ້ຳຕາມລ້ອງນ້ຳງື່ມ , ເພື່ອການນຳໃຊ້ເປັນງົບປະມານໃນການລົງຕິດຕາມຈົດບັນທຶກຂໍ້ມູນລະດັບນ້ຳ ໃຫ້ແກ່ບັນດາເຂື່ອນໄຟຟ້າ ພະລັງງານນ້ຳ ແລະ ແລກປ່ຽນຂໍ້ມູນຂ່າວສານອຸຕຸນິຍົມ ແລະ ການພະຍາກອນອາກາດ ເພື່ອສະໜອງໃຫ້ແກ່ ວຽກງານຕ້ານແລ້ງ-ຕ້ານຖ້ວມ ສົກປີ 2021.
7) ສະໜອງງົບປະມານວຽກງານ ສຳຫຼວດວັດແທກທີ່ດິນເຂື່ອນໄຟຟ້ານ້ຳຈຽນ ຈຳນວນ 46.852.000 ກີບ.
8) ບັນດາເຂື່ອນໄຟຟ້າຂອງຜ-ຟຟລ ແມ່ນໄດ້ມີການຕິດຕາມລະດັບນ້ຳ, ກວດກາຄຸນະພາບນ້ຳ ແລະ ອະນາໄມໜ້າ ອ່າງຢ່າງເປັນປະຈຳ ພ້ອມນັ້ນກໍ່ໄດ້ມີການສຳຫຼວດບໍລິເວນອ້ອມຮອບ ແລະ ກວດກາສະພາບການຕ່າງໆຢ່າງ ເປັນປົກະຕິລວມໄປເຖິງການສົ່ງເສີມຄວາມອຸດົມສົມບູນທາງດ້ານຊີວະນາໆພັນ.

❖ ວຽກງານທາງດ້ານສັງຄົມ

1) ໃນວັນທີ 11 ມັງກອນ 2021 ທີ່ຫ້ອງການກອງບັນຊາການ ປກສ ເມືອງ ທ່າແຕງ, ແຂວງ ເຊກອງ ເຂື່ອນໄຟຟ້າ ຫ້ວຍລຳພັນໃຫຍ່ ໄດ້ຈັດພິທີມອບ-ຮັບເງິນ ງົບປະມານໃຊ້ໃນການເຄື່ອນໄຫວຈັດຕັ້ງປະຕິບັດຂຶ້ນທະບຽນ ແລະ ອອກປຶ້ມສຳມະໂນຄົວໃຫ້ແກ່ ບ້ານ ຫ້ວຍດຳໃໝ່ ຈຳນວນ 40.025.000 ກີບ
2) ລົງສຳຫຼວດລະບົບໂທລະໂຄ່ງ ແລະ ວິທະຍຸໃນເຂດລຸ່ມເຂື່ອນໄຟຟ້ານ້ຳງື່ມ 1 ແລະ ນ້ຳຊອງ, ພ້ອມທັງ ສະໜັບ ສະໜູນງົບປະມານ 43.200.000 ກີບ ໃນການຕິດຕັ້ງ ແລະ ສ້ອມແປງລະບົບໂທລະໂຄ່ງທີ່ເປ່ເພ.

3) ໃນເດືອນ ກຸມພາ 2021, ເຂື່ອນໄຟຟ້ານ້ຳຄານ 2-3 ໄດ້ຈັດຝຶກອົບຮົມເສີມທັກສະການຜະລິດຝອຍກວາດ ດ້ວຍດອກແຂມໃຫ້ແກ່ປະຊາຊົນບ້ານຜູ້ຊ່ຽງເຊິ່ງເປັນບ້ານຈັດສັນຂອງເຂື່ອນໄຟຟ້ານ້ຳຄານ 2-3 ເປັນຈຳນວນ 11.330.000 ກີບ.
4) ເຂື່ອນໄຟຟ້ານ້ຳຈຽນໄດ້ສົມທົບງົບປະມານ ຈຳນວນ 20.000.000 ກີບ ໃນການກໍ່ສ້າງຫ້ອງການຫຼັງໃໝ່ ໃນແກ່ອຳນາດການປົກຄອງບ້ານ ຊຳກຳທອງ, ເມືອງ ທ່າໂທມ, ແຂວງ ໄຊສົມບູນ.
5) ເຂື່ອນໄຟຟ້າແຊລະບຳ ໄດ້ສະໜັບສະໜູນອຸປະກອນການຮຽນທີ່ຈຳເປັນ ພ້ອມທັງ ຕົ້ນໄມ້ຈຳນວນໜຶ່ງໃຫ້ແກ່ ໂຮງຮຽນປະຖົມແຊລະບຳ, ເມືອງຊະນະສົມບູນ, ແຂວງຈຳປາສັກ ລວມມູນຄ່າ 5.040.000 ກີບ.
6) ເຂື່ອນໄຟຟ້າເຊເສັດ 3 ໄດ້ປະກອບສ່ວນຊ່ວຍເຫຼືອ ສີ ເພື່ອທາສຸກສາລາ ບ້ານ ພໍ່ເຂັມ, ເມືອງ ເລົ່າງາມ, ແຂວງ ສາລະວັນ ລວມມູນຄ່າ 3.500.000 ກີບ.
7) ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ໄດ້ຈັດຝຶກອົບຮົມເຕັກນິກ ແລະ ວິທີການໃນການປູກເຫັດໃຫ້ແກ່ປະຊາຊົນບ້ານ ຫ້ວຍດຳໃໝ່ ໃນເດືອນ ກຸມພາ, ແລະ ໃນ ເດືອນ ມີນາ ແມ່ນໄດ້ຈັດກອງປະຊຸມເຜີຍແຜ່ນິຕິກຳຄຸ້ມຄອງກ່ຽວ ກັບຊັບພະຍາກອນທຳມະຊາດໃນເຂດຄຸ້ມຄອງຂອງເຂື່ອນ ລວມມູນຄ່າ 9.535.000 ກີບ.
8) ສະໜອງງົບປະມານຈຳນວນ 65.123.320 ກີບ ໃນການອອກປຶ້ມສຳມະໂນຄົວໃຫ້ແກ່ປະຊາຊົນບ້ານຈັດສັນ ຫ້ວຍດຳໃໝ່, ຂອງເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່.
9) ໃນວັນທີ 27 ສິງຫາ 2021, ຜ-ຟຟລ ໄດ້ອຸປະຖຳເງິນ ຈຳນວນ 5.000.000 ກີບ ໃຫ້ແກ່ ຜູ້ຕາງໜ້າຈາກ ລັດວິສາຫະກິດໄຟຟ້າລາວ ເພື່ອປະກອບສ່ວນຊ່ວຍເຫຼືອ ຜູ້ປະສົບໄພນ້ຳຖ້ວມທີ່ແຂວງໄຊຍະບູລີ.
10) ສ້ອມແປງໂຮງຮຽນບ້ານແສນວັງໃຫຍ່, ບ້ານຄຽງຕັ້ງແລ, ບ້ານສະນຶມນອກ , ເຈາະບາດານ ແລະ ສ້າງຂົວຈົມ ຫ້ວຍຕະປຸງ ເຂດເຂື່ອນໄຟຟ້າເຊເສັດ1-2 ຈຳນວນ 333.544.000 ກີບ.
11) ສ້າງໂຮງຮຽນ ທີ່ບ້ານວັງເຮືອ, ເມືອງລ່ອງຊານ, ແຂວງໄຊສົມບູນ ເຂດເຂື່ອນໄຟຟ້ານ້ຳເລິກ ຕາມສັນຍາສຳ ປະທານ ລວມມູນຄ່າ 999.098.001 ກີບ.
12) ໃນນີ້ ບັນດາເຂື່ອນຂອງ ຜ-ຟຟລ ແມ່ນໄດ້ເອົາໃຈໃສ່ໃນການ ໃນການມີສ່ວນຮ່ວມຕໍ່ສັງຄົມ ແລະ ຊຸມຊົນອ້ອມ ຂ້າງໃນທຸກໆດ້ານ ໂດຍສະເພາະ ແມ່ນການສົ່ງເສີມ ຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ ແລະ ສົ່ງເສີມການ ສຶກສາຂອງ ນ້ອງນັກຮຽນທີ່ຍັງຂາດເຂີນ, ການບູລະນະສ້ອມແປງ ແລະ ສະໜອງພື້ນຖານໂຄງລ່າງຕ່າງໆ ຢ່າງ ເປັນປະຈຳ.

7. ວຽກງານນິຕິກຳການລົງທຶນ

- ກະກຽມລົງນາມສັນຍາສຳປະທານກັບລັດຖະບານ ສຳລັບໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນ ໄຟຟ້າຫ້ວຍລຳພັນໃຫຍ່.
- ກະກຽມການໂອນໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍຈັກເບີ 7 ແລະ 8.
- ສືບຕໍ່ກະກຽມລາຍການຊັບສິນການໂອນໂຄງການເຂື່ອນໄຟຟ້າທີ່ ຟຟລ ລົງທຶນ 100% ປະກອບມີ: ເຂື່ອນໄຟຟ້ານ້ຳຈຽນ, ເຂື່ອນໄຟຟ້າເຊເສັດ 3 ແລະ ເຂື່ອນໄຟຟ້ານ້ຳຄານ 3.
- ສືບຕໍ່ການໂອນຮຸ້ນຕາງໜ້າລັດຖະບານຈາກ ຟຟລ ປະກອບມີ: ເຂື່ອນໄຟຟ້ານ້ຳອູ 2-5-6, ເຂື່ອນ ໄຟຟ້ານ້ຳງຽບ 2 ແລະ ເຂື່ອນໄຟຟ້ານ້ຳລິກ 1.

8. ການລະດົມທຶນ

ໃນວັນທີ 08 ກໍລະກົດ 2021, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ສະກຸນເງິນບາດ ຄັ້ງທີ I ຈຳນວນ 2.099,4 ລ້ານບາດ ແລະ ໃນວັນທີ 23/09/2021 ໄດ້ອອກຈຳໜ່າຍຮຸ້ນກູ້ສະກຸນເງິນບາດ ຄັ້ງທີ II ຈຳນວນ 3.527,4 ລ້ານບາດ. ລວມທັງໝົດ 5.626,8 ລ້ານບາດ, ດ້ວຍອັດຕາດອກເບ້ຍສະເລ່ຍ (ຖ່ວງນ້ຳໜັກ) 6,19% ຕໍ່ປີ.

III. ແຜນການດຳເນີນທຸລະກິດຂອງບໍລິສັດປີ 2022

1. ການຜະລິດ

- **ກຳລັງການຜະລິດ:**

- ເຂື່ອນໄຟຟ້າທີ່ຂຶ້ນກັບ ຜ-ຟຟລ ຈຳນວນ 13 ແຫ່ງ ລວມກຳລັງຕິດຕັ້ງ **886 MW**
- ເຂື່ອນໄຟຟ້າທີ່ ຜ-ຟຟລ ເຂົ້າຖືຮຸ້ນ ຈຳນວນ 17 ແຫ່ງ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ **1.071,52 MW**
- EDL-Gen Solar ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ **19,20 MW.**

ລວມກຳລັງຕິດຕັ້ງທັງໝົດ 1.976,72 MW

- **ແຜນການຜະລິດພະລັງງານໄຟຟ້າ:**

- ຕົວເລກແຜນການຜະລິດ ຈາກເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ເທົ່າກັບ 3.293,85 GWh.
- ຕົວເລກແຜນການຜະລິດ ຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ ເທົ່າກັບ 5.064,10 GWh ຕາມສັດສ່ວນຖືຮຸ້ນ.
- ຕົວເລກແຜນການຜະລິດຈາກ ບໍລິສັດ EDL-Gen Solar ເທົ່າ 28,84 GWh ຕາມສັດສ່ວນຖືຮຸ້ນ.

ລວມຕົວເລກແຜນການຜະລິດພະລັງງານໄຟຟ້າ ໃນປີ 2022 ທັງໝົດເທົ່າກັບ 8.386,79 GWh

2. ການຈຳໜ່າຍພະລັງງານໄຟຟ້າ.

- ແຜນການຈຳໜ່າຍຈາກເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ເທົ່າກັບ **3.238,07 GWh**.
- ແຜນການຈຳໜ່າຍ ຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ ເທົ່າກັບ **5.060,46 GWh** ໂດຍອີງຕາມສັດສ່ວນການຖືຮຸ້ນ.
- ແຜນການຈຳໜ່າຍ ຈາກໂຄງການ EDL-Gen Solar ເທົ່າກັບ **28,84 GWh** ຕາມສັດສ່ວນຖືຮຸ້ນ.

ລວມຕົວເລກແຜນການຈຳໜ່າຍພະລັງງານໄຟຟ້າ ໃນປີ 2022 ທັງໝົດເທົ່າກັບ 8.327,37 GWh

3. ການລົງທຶນເຂົ້າໃນການຂະຫຍາຍກຳລັງຕິດຕັ້ງ

ໃນປີ 2022, ຜ-ຟຟລ ຈະສືບຕໍ່ລົງທຶນໃນໂຄງການຕ່າງໆ ໂດຍສະເພາະບັນດາເຂື່ອນທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ຂອງ ຜ-ຟຟລ ລວມທັງໂຄງການໃໝ່ອື່ນໆ ເຊັ່ນ:

- **ຮຸ້ນໃນໂຄງການເຂື່ອນ IPPs ທີ່ລົງທຶນໂດຍກົງ**

1.	ເຂື່ອນໄຟຟ້ານ້ຳພູນ	ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ	51%	23 MW.
2.	ເຂື່ອນໄຟຟ້ານ້ຳດິກ 1	ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ	70%	10,5 MW.

4. ການມອບພັນທະໃຫ້ລັດ

ຜ-ຟຟລ ມີພັນທະໃຫ້ລັດ ປະກອບດ້ວຍ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຈຳໜ່າຍກະແສໄຟຟ້າ, ອາກອນເງິນປັນຜົນ 10%, ອາກອນມູນຄ່າເພີ່ມ 7%, ອາກອນກຳໄລ ແລະ ອາກອນລາຍໄດ້ຂອງບຸກຄົນ.

5. ການພັດທະນາຊັບພະຍາກອນມະນຸດ

ໂດຍແນໃສ່ການສ້າງບຸກຄະລາກອນ ຂອງ ຜ-ຟຟລ ໃຫ້ເປັນມືອາຊີບ, ສາມາດປະຕິບັດວຽກງານໄດ້ຢ່າງຄ່ອງຕົວ ແລະ ມີປະສິດທິພາບສູງ ເພື່ອສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ຂອງການດຳເນີນທຸລະກິດໃນອະນາຄົດ, ບໍລິສັດໄດ້ເອົາໃຈໃສ່ ວາງແຜນໄລຍະສັ້ນ ແລະ ໄລຍະຍາວ ເພື່ອຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານກຳມະກອນ ຢ່າງເປັນລະບົບ, ໂດຍສະເພາະ ຄວາມຮູ້ພື້ນຖານໃນການປະຕິບັດລະບຽບການ, ການຍົກສູງວິຊາສະເພາະທາງດ້ານເຕັກນິກວິຊາການ. ໃນປີ 2022, ຜ-ຟຟລ ຈະໄດ້ສືບຕໍ່ສ້າງວິຊາການຊຳນານງານ, ຍົກລະດັບ

ຄວາມຮູ້ຄວາມສາມາດຂອງພະນັກງານ ແລະ ຝຶກອົບຮົມດ້ານການດຳເນີນທຸລະກິດການເງິນ, ບັນດາຂໍ້ກຳນົດ ແລະ ກົດລະບຽບຂອງວຽກງານຕະຫຼາດຫຼັກຊັບ. ແຜນພັດທະນາບຸກຄະລາກອນຂອງ ຜ-ຟຟລ ໄດ້ກວມເອົາດ້ານການບໍລິຫານ, ດ້ານການເງິນ ແລະ ເຕັກນິກວິຊາການຕ່າງໆ ໂດຍມີແຜນຈັດສົ່ງເຂົ້າຝຶກອົບຮົມ ທີ່ສູນຝຶກ ຟຟລ ແລະ ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ.

6. ວຽກງານສິ່ງແວດລ້ອມ ແລະ ສັງຄົມ

ເພື່ອເຮັດໃຫ້ການດຳເນີນທຸລະກິດຜະລິດພະລັງງານໄຟຟ້າ ໃນການສືບຕໍ່ປະກອບສ່ວນໃຫ້ມີການພັດທະນາ ແລະ ຄວາມຍືນຍົງ ຕໍ່ກັບສັງຄົມ ແລະ ທຳມະຊາດແວດລ້ອມບໍລິເວນເຂື່ອນ, ໃນປີ 2022 ຜ-ຟຟລ ມີແຜນວຽກງານສິ່ງແວດລ້ອມ-ສັງຄົມ ໂດຍແບ່ງອອກເປັນ 2 ພາກສ່ວນ ຄື: (1) ການປະຕິບັດຜັນທະຕາມສັນຍາສຳປະທານ ເຊັ່ນ: ວຽກງານຄຸ້ມຄອງອ່າງໂຕ່ງ, ວຽກງານຄຸ້ມຄອງສິ່ງແວດລ້ອມອ້ອມຂ້າງເຂື່ອນ ແລະ ຄຸ້ມຄອງຄຸນນະພາບນ້ຳ; (2) ການປະກອບສ່ວນຕໍ່ສັງຄົມ ແລະ ພັດທະນາຊຸມຊົນອ້ອມຂ້າງເຂື່ອນ ໂດຍການມີສ່ວນຮ່ວມຂອງຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ.

IV. ວິໄສທັດ ແລະ ພາລະກິດ ຂອງ ບໍລິສັດ ສະບັບປັບປຸງ.

ເພື່ອເຮັດໃຫ້ແທດເໝາະກັບສະຖານະການໃນການດຳເນີນທຸລະກິດ ຂອງບໍລິສັດໃນປັດຈຸບັນ, ບໍລິສັດສະເໜີການດັດແກ້ ວິໄສທັດ ແລະ ພາລະກິດ ຂອງບໍລິສັດຊຶ່ງປະກອບມີ 3 ວິໄສທັດ ແລະ 5 ພາລະກິດ ສະບັບປັບປຸງ ຂອງ ຜ-ຟຟລ ດັ່ງນີ້:

(3 ວິໄສທັດ):

1. ເປັນບໍລິສັດນຳໜ້າ ຂອງ ສປປ ລາວ ໃນການຜະລິດພະລັງງານໄຟຟ້າ ທີ່ໝັ້ນຄົງ ເພື່ອຕອບສະໜອງໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ແລະ ຂອງພູມິພາກ ຕາມທິດສີຂຽວ ແລະ ຍືນຍົງ.
2. ເປັນບໍລິສັດນຳໜ້າ ໃນການໃຫ້ບໍລິການຄຸ້ມຄອງ ແລະ ບຳລຸງຮັກສາ ໂຮງງານຜະລິດໄຟຟ້າໃນ ສປປ ລາວ ແລະ ໃນພູມິພາກ.
3. ເປັນບໍລິສັດນຳໜ້າ ທີ່ ສ້າງມູນຄ່າເພີ່ມ ໃຫ້ແກ່ຜູ້ຖືຮຸ້ນ.

(5 ພາລະກິດ):

1. ສະໜອງໄຟຟ້າ ດ້ວຍແຫຼ່ງພະລັງງານສະອາດ ແລະ ພະລັງງານທົດແທນ ໂດຍຄຳນຶງເຖິງສິ່ງແວດລ້ອມ ເພື່ອສ້າງຄວາມໝັ້ນຄົງ ແລະ ຍືນຍົງທາງດ້ານພະລັງງານໃຫ້ແກ່ປະເທດ ແລະ ພູມິພາກ.
2. ມີຂະບວນການຕັດສິນໃຈ ແລະ ຂັ້ນຕອນການດຳເນີນງານທີ່ຈະແຈ້ງ, ໂປ່ງໃສ ແລະ ກວດສອບໄດ້.
3. ສົມທົບຢ່າງສະໜິດແໜ້ນ ກັບ ຄູ່ຮ່ວມຍຸດທະສາດ ແລະ ບໍລິສັດຈຳໜ່າຍພະລັງງານໄຟຟ້າ ໃນການສະໜອງພະລັງງານໄຟຟ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ພາຍໃນປະເທດ ແລະ ພູມິພາກ.
4. ຕັ້ງໜ້າຍົກສູງປະສິດທິພາບ ແລະ ພັດທະນາບໍລິສັດໃນທຸກດ້ານ ເພື່ອໃຫ້ກາຍເປັນທັງຜູ້ຜະລິດ ແລະ ໃຫ້ບໍລິການຄຸ້ມຄອງ-ບຳລຸງຮັກສາ ໂຮງງານລິດໄຟຟ້າ ໃນ ສປປ ລາວ ແລະ ພູມິພາກ.
5. ລົງທຶນໃນທຸລະກິດ ທີ່ ເນັ້ນໃສ່ການສ້າງມູນຄ່າເພີ່ມ ທັງໄລຍະສັ້ນ ແລະ ໃນໄລຍະຍາວ ເພື່ອໃຫ້ໄດ້ຮັບຜົນຕອບແທນສູງສຸດ ຢ່າງຕໍ່ເນື່ອງໃຫ້ແກ່ຜູ້ຖືຮຸ້ນ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດເອົາລາຍງານການເງິນ 6 ເດືອນຕົ້ນປີ 2021 ແລະ ບໍ່ອະນຸມັດການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2021ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2021 ລວມທັງລາຍງານການເງິນ

ຂອງບໍລິສັດ ປີ 2021, ແຜນການດຳເນີນທຸລະກິດຂອງບໍລິສັດປີ 2022 ແລະ ວິໄສທັດ ແລະ ພາລະກິດ ຂອງບໍລິສັດ ສະບັບປັບປຸງ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2021, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນ.

ລາຍລະອຽດ:

ອີງຕາມກົດລະບຽບຂອງບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ໜຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫລັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ, ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2021 ເປັນຈຳນວນທັງໝົດ 3,88 ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2021 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **22 ເມສາ 2022** ໃນອັດຕາຮຸ້ນລະ **50** ກີບ, ລວມເປັນເງິນປັນຜົນຈ່າຍທັງໝົດ 83,96 ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **27 ພຶດສະພາ 2022**.

ຄຳເຫັນຂອງສະພາບໍລິຫານ:

ການສະເໜີຈ່າຍເງິນປັນຜົນຂອງບໍລິສັດ ແມ່ນຖືກປະຕິບັດຕາມນະໂຍບາຍການຈ່າຍເງິນປັນຜົນຂອງ ບໍລິສັດ ແລະ ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2021, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນ ດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຄັດເລືອກ ແລະ ການກຳນົດຄ່າຈ້າງຜູ້ກວດສອບພາຍນອກສຳລັບປີ 2023-2025.

ລາຍລະອຽດ:

ໂດຍອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ມາດຕາ 149 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມ ສາມັນຜູ້ຖືຮຸ້ນ.

ບໍລິສັດສະເໜີແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Ernst and Young Lao Limited ເປັນ ຜູ້ກວດສອບບັນຊີພາຍນອກຂອງບໍລິສັດສຳລັບປີ 2023-2025, ເນື່ອງຈາກວ່າບໍລິສັດດັ່ງກ່າວຊະນະການປະມູນ ໂດຍ ມີຄ່າຈ້າງ ຂອງຜູ້ກວດສອບບັນຊີສຳລັບບັນຊີປີ 2023 ເປັນຈຳນວນເງິນບໍ່ເກີນ 685.000.000 ກີບ, ປີ 2024 ເປັນ ຈຳນວນເງິນບໍ່ເກີນ 685.000.000 ກີບ ແລະ ປີ 2025 ເປັນຈຳນວນເງິນບໍ່ເກີນ 685.000.000 ກີບ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6. ພິຈາລະນາ ແລະ ອະນຸມັດການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານ ໃນສົກປີ 2022.

ລາຍລະອຽດ:

ໂດຍອີງໃສ່ການເໜັງຕີງທາງດ້ານເສດຖະກິດ ອັດຕາເງິນເຟີ້ ແລະ ເພື່ອຮັບປະກັນທາງດ້ານຊີວິດຄວາມເປັນຢູ່ຂອງພະນັກງານ-ກຳມະກອນ, ເຮັດໃຫ້ອົງກອນມີການພັດທະນາທີ່ດີຂຶ້ນ ສາມາດແຂ່ງຂັນກັບບໍລິສັດຮ່ວມທຶນ ແລະ ເອກະຊົນອື່ນໆ ແລະ ເພື່ອເປັນການສ້າງຂວັນກຳລັງໃຈໃຫ້ພະນັກງານທີ່ໄດ້ປະກອບສ່ວນເຂົ້າໃນການດຳເນີນທຸລະກິດ ຂອງບໍລິສັດຢ່າງເຕັມສ່ວນ. ສະເໜີກອງປະຊຸມພິຈາລະນາເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານຂຶ້ນຕື່ມ 10,5 ສ່ວນຮ້ອຍ ໃນສົກປີ 2022.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານ ຜ-ຟຟລ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7. ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

ລາຍລະອຽດ:

ເນື່ອງຈາກມີການປ່ຽນແປງຄະນະສະພາບໍລິຫານ ຂອງບໍລິສັດ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານ ຂອງບໍລິສັດ ດຳເນີນການໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ສະເໜີກອງປະຊຸມພິຈາລະນາຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ; ລາຍລະອຽດມີດັ່ງນີ້:

1) **ດັດແກ້ມາດຕາ 9 ວ່າດ້ວຍກຳມະການ:** ປ່ຽນຊື່ ແລະ ຂໍ້ມູນຂອງສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນສະພາບໍລິຫານຜູ້ເກົ່າຄື:

ກ. ຜູ້ຖືຮຸ້ນເປັນກຳມະການ:

1. ຊື່ ແລະ ນາມສະກຸນ: ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 187, ໜ່ວຍ 12, ບ້ານ ໂພນສະຫວັນໃຕ້, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ.
2. ຊື່ ແລະ ນາມສະກຸນ: ທ່ານ ນາງ ມະນີວອນ ພົນອາມາດ
   - ສັນຊາດ: ລາວ;

- ທີ່ຢູ່ປະຈຸບັນ: ເຮືອນເລກທີ 143, ໜ່ວຍ 28, ບ້ານ ສະພານທອງເໜືອ, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ.

3. ຊື່ ແລະ ນາມສະກຸນ: ທ່ານ ຊິນລະວິດ ວິນິດໄສ
   - ສັນຊາດ: ໄທ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 20, ໜ່ວຍ 902, ບ້ານ ໜອງດ້ວງເໜືອ, ເມືອງ ສີໂຄດຕະບອງ ແຂວງ ນະຄອນຫຼວງວຽງຈັນ.

ຂ. ຈ້າງບຸກຄົນພາຍນອກເປັນກຳມະການ (ຖ້າມີ):

ກຳມະການທີໜຶ່ງ:

4. ຊື່ ແລະ ນາມສະກຸນ: ທ່ານ ສົມພິດ ແກ້ວວິຈິດ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 161, ໜ່ວຍ 12, ບ້ານ ໂພນສະຫວາດໃຕ້, ເມືອງ ສີໂຄດຕະບອງ ແຂວງ ນະຄອນຫຼວງວຽງຈັນ.

ກຳມະການທີສອງ (ອິດສະຫຼະ)

5. ຊື່ ແລະ ນາມສະກຸນ: ທ່ານ ຄຳມູນ ວິຟົງໄຊ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 390, ໜ່ວຍ 38, ບ້ານ ໂພນສະຫວ່າງ, ເມືອງ ຈັນທະບູລີ ແຂວງ ນະຄອນຫຼວງວຽງຈັນ.

ກຳມະການທີສາມ (ອິດສະຫຼະ)

6. ຊື່ ແລະ ນາມສະກຸນ: ທ່ານ ຄຳແກ້ວ ວິສີສົມບັດ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 015, ໜ່ວຍ 02, ບ້ານ ໂພນໄຊ, ເມືອງ ໄຊເສດຖາ ແຂວງ ນະຄອນຫຼວງວຽງຈັນ.

ກຳມະການທີສີ່ (ອິດສະຫຼະ)

7. ຊື່ ແລະ ນາມສະກຸນ: ທ່ານ ປອ. ພັນປະກິດ ອ່ອນພັນດາລາ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ເຮືອນເລກທີ 593, ໜ່ວຍ 43, ບ້ານ ຫ້ວຍຫົ່ງ, ເມືອງ ຈັນທະບູລີ ແຂວງ ນະຄອນຫຼວງວຽງຈັນ.

2) **<u>ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ:</u>** ຂໍ້ມູນຂອງສະພາບໍລິຫານຜູ້ໃໝ່ຄື:

1. ປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ
2. ຮອງປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ຈັນທະບູນ ສຸກອາລຸນ

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼືຄຳສັ່ງໃຫ້ດັດແກ້.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງການດັດແກ້ ກົດລະບຽບບໍລິສັດ ລວມທັງການມອບອຳນາດດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜອ້ຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020, ວັນທີ 09 ເມສາ 2021

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 21/04/2021

ບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 09 ເມສາ 2021 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ ເປັນປະທານກອງປະຊຸມ; ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ 26 ທ່ານ ແລະ ມອບສັນທະຈຳນວນ 140 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 166 ທ່ານ ຖືຮຸ້ນລວມກັນທັງໝົດ 1.501.500.409 ຮຸ້ນ ເທົ່າກັບ 89,41 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳກຳມະການສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ ເຂົ້າຮ່ວມປະຊຸມ ດັ່ງນີ້:

1.	**ທ່ານ ປອ. ຄຳມະນີ ອິນທິລາດ**	ຕຳແໜ່ງ:	ປະທານສະພາບໍລິຫານ
2.	**ທ່ານ ຈັນທະບຸນ ສຸກອາລຸນ**	ຕຳແໜ່ງ:	ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
3.	**ທ່ານ ດວງສີ ພາທາຍົກ**	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
4.	**ທ່ານ ຄຳເພັ້ງ ທິນນະກອນ**	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຮອງຜູ້ອຳນວຍການ ໃຫຍ່ ລັດວິສາຫະກິດໄຟຟ້າລາວ;
5.	**ທ່ານ ສົມພິດ ແກ້ວວິຈິດ**	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຫົວໜ້າກົມທຸລະກິດ ພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່;
6.	**ທ່ານ ໂກມົນຈັນ ເພັດອາສາ**	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ບໍລິສັດນ້ຳງື່ມ 3 ພາວເວີ້ຈຳກັດ;
7.	**ທ່ານ ຄຳແກ້ວ ວິສີສົມບັດ**	ຕຳແໜ່ງ:	ກຳມະການອິດສະຫຼະ/ຫົວໜ້າກົມບໍລິການ ທະນາຄານ ແຫ່ງ ສປປ ລາວ.

8. **ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ** ຕຳແໜ່ງ: ກຳມະການອິດສະຫຼະ/ຮອງຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ

9. **ທ່ານ ຣສ. ປອ. ພູເພັດ ກ້ຽວພິລາວົງ** ຕຳແໜ່ງ: ກຳມະການອິດສະຫຼະ/ຄະນະບໍດີຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ;

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຜູ້ກວດສອບພາຍນອກ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມ ແລະ ຄະນະກຳມະການກວດສອບພາຍໃນ ຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ນອກຈາກນັ້ນ, ທ່ານປະທານໄດ້ກ່າວ ແລະ ແນະນຳໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຊາບຕື່ມອີກວ່າ: ເນື່ອງຈາກສະພາບການລະບາດຂອງພະຍາດ COVID-19 ທີ່ກຳລັງເປັນໄພຄຸກຄາມ ແລະ ຍັງສືບຕໍ່ການລະບາດຢູ່ໃນໂລກ. ສຳລັບຢູ່ປະເທດລາວ ກໍຄື ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ພວກເຮົາ ກໍໄດ້ປະຕິບັດຕາມຄຳສັ່ງ ຂອງ ທ່ານນາຍົກລັດຖະມົນຕີ, ຄຳແນະນຳຂອງຄະນະສະເພາະກິດ, ແລະ ປະຕິບັດຕາມນິຕິກຳອື່ນໆທີ່ກ່ຽວຂ້ອງ ທີ່ທາງລັດຖະບານ ແລະ ຄະນະສະເພາະກິດ ໄດ້ອອກມະໂຍບາຍຕ່າງໆ ມາເປັນແຕ່ລະໄລຍະ. ເຖິງແມ່ນວ່າຕົວເລກຜູ້ຕິດເຊື້ອຈະຢູ່ຄົງທີ່ ແຕ່ພວກເຮົາກໍຕ້ອງໄດ້ສືບຕໍ່ມາດຕະການປ້ອງກັນ, ສະກັດກັ້ນ ແລະ ຄວບຄຸມ ເພື່ອຮັບມືກັບການລະບາດຂອງພະຍາດດັ່ງກ່າວ ທີ່ອາດຈະເກີດຂຶ້ນໄດ້ອີກ ໃນໄລຍະໃໝ່.

ສະນັ້ນ ການຈັດກອງປະຊຸມຄັ້ງນີ້ ກໍຈະຍັງຄົງສືບຕໍ່ປະຕິບັດຕາມມາດຕະການທີ່ໄດ້ປະຕິບັດໃນໄລຍະທີ່ຜ່ານມາ; ເປັນຕົ້ນພວກເຮົາໄດ້ມີການແນະນຳໃຫ້ບັນດາທ່ານຜູ້ຖືຮຸ້ນ ດາວໂຫລດເອົາບັດເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ຢູ່ທີ່ເວັບໄຊທ໌ຂອງບໍລິສັດ ແລະ ເວັບໄຊທ໌ຂອງ ຕະຫລາດຫລັກຊັບລາວ, ຊຶ່ງໄດ້ແນະນຳໃຫ້ບັນດາທ່ານຜູ້ຖືຮຸ້ນ ມອບສັນທະໃຫ້ກຳມະການອິດສະຫຼະຂອງບໍລິສັດ ເຂົ້າຮ່ວມປະຊຸມແທນ.

ການປະຕິບັດກ່ອນເຂົ້າຫ້ອງປະຊຸມ ກໍໄດ້ມີການວັດແທກອຸນຫະພູມ ຕາມການແນະນຳຂອງໜ່ວຍງານສະເພາະກິດ ກໍຄື ກະຊວງສາທາລະນະສຸກ. ສຳລັບການນັ່ງ ກໍໄດ້ມີການເວັ້ນໄລຍະຫ່າງ ເພື່ອຮັກສາໄລຍະຫ່າງຂອງແຂກທີ່ເຂົ້າຮ່ວມກອງປະຊຸມ. ໃນກອງປະຊຸມຄັ້ງນີ້ ກໍໄດ້ຈັດອາຫານຫວ່າງ ແລະ ຈັດແຈກຂອງທີ່ລະນຶກ ເພື່ອຫຼີກລ່ຽງການສຳຜັດວັດຖຸສິ່ງຂອງຮ່ວມກັບຜູ້ອື່ນ ເພື່ອຄວາມປອດໄພ ແລະ ສຸຂະນາໄມຂອງຜູ້ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ດວງສີ ພາຣາຍົກ ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

1. **ການລົງຄະແນນສຽງ**:

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.
  * ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີ

ເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.

* ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍ ໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີ ມາຫັກລົບອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີ/ງົດເວັ້ນ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ບໍລິສັດ ໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ຫຼັງຈາກນັ້ນ, ຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນໃນຄັ້ງທີ່ຜ່ານມາ ກໍຄືກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຊຶ່ງວາລະທີ 1, 2, 3, 4, 5, 6, 7, 8 ແລະ 9 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີ ຂອງກອງປະຊຸມສາມັນຜູ້ຖືຮຸ້ນແລ້ວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ ທ່ານ ປະທານ ເປີດໂອກາດໃຫ້ ຜູ້ຖືຮຸ້ນມີຄຳຖາມ, ຫຼັງຈາກນັ້ນ ທ່ານ ປະທານ ໄດ້ລາຍງານການຈັດຕັ້ງປະຕິບັດ ມະຕິກອງປະຊຸມສາມັນຜູ້ຖືຮຸ້ນປີຜ່ານມາ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021, ໄດ້ປະຊຸມເມື່ອວັນທີ 03 ມີນາ 2021, ໂດຍມີລາຍລະອຽດໃນເອກະສານຄັດຕິດ ທີ່ໄດ້ຄັດຕິດໃນໜັງສືແຈ້ງເຊີນ ແລະ ສະພາບໍລິຫານໄດ້ຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ເຫັນດີສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນດັ່ງກ່າວ.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ສະເໜີໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021. ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2021, ວັນທີ 03 ມີນາ 2021, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.501.505.009 ສຽງ, ເທົ່າກັບ 99,99994 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 900 ສຽງ, ເທົ່າກັບ 0,00006 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3. ພິຈາລະນາ ແລະ ອະນຸມັດລາຍງານການເງິນ 6 ເດືອນຕົ້ນປີ 2020 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2020.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ກອງປະຊຸມ ອີງຕາມການມອບອຳນາດ ຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ຄັ້ງວັນທີ 22 ເມສາ 2013. ການເຄື່ອນໄຫວທຸລະກິດ ຂອງບໍລິສັດໃນ 6 ເດືອນຕົ້ນປີ 2020 ຂາດທຶນເປັນຈຳນວນເງິນ 15,53 ຕື້ກີບ, ເນື່ອງມາຈາກສະພາບອາກາດໃນລະດູຝົນບໍ່ເອື້ອອຳນວຍ, ແຫ້ງແລ້ງ, ຝົນບໍ່ຕົກຖືກຕາມລະດູການ ສິ່ງຜົນເຮັດໃຫ້ບໍ່ມີນ້ຳພຽງພໍເຂົ້າໃນການຜະລິດພະລັງງານໄຟຟ້າ ແລະ ເຮັດໃຫ້ການຜະລິດບໍ່ໄດ້ຕາມແຜນການທີ່ວາງໄວ້; ລວມທັງການຜະລິດ ຂອງບັນດາເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ບໍລິສັດເຂົ້າຖືຮຸ້ນ ກໍ່ບໍ່ສາມາດຜະລິດພະລັງງານໄຟຟ້າໄດ້ຕາມແຜນການ. ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ຂອງບໍລິສັດ.

ບໍລິສັດບໍ່ອະນຸມັດຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2020 ໃຫ້ຜູ້ຖືຮຸ້ນ ເນື່ອງຈາກວ່າບໍ່ມີກຳໄລໃນການດຳເນີນທຸລະກິດ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດ ເອົາລາຍງານການເງິນ 6 ເດືອນຕົ້ນປີ 2020 ແລະ ການບໍ່ອະນຸມັດການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2020.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ສະເໜີຫຍໍ້ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດ ເອົາລາຍງານການເງິນ 6 ເດືອນຕົ້ນປີ 2020 ແລະ ບໍ່ອະນຸມັດການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2020, ໃນນີ້ ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີອະນຸມັດລາຍງານການເງິນ 6 ເດືອນຕົ້ນປີ 2020 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2020 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ 1.501.500.909 ສຽງ, ເທົ່າກັບ 99,99967 ສ່ວນຮ້ອຍ ຂອງ ຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 5.000 ສຽງ, ເທົ່າກັບ 0,00033 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ພິຈາລະນາ ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປີ 2020 ລວມທັງລາຍງານການເງິນ ຂອງບໍລິສັດ ປີ 2020 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2021.

ຜູ້ອຳນວຍການໃຫ່ຍ ໄດ້ສະເໜີຕໍ່ກອງປະຊຸມກ່ຽວກັບການດຳເນີນທຸລະກິດຂອງ ຜ-ຟຟລ ໃນປີ 2020 ມີລາຍລະອຽດຄື: ໄດ້ຜະລິດກະແສໄຟຟ້າຂາຍຍົກໃຫ້ ລັດວິສາຫະກິດໄຟຟ້າລາວ ຕາມສັນຍາຊື້-ຂາຍໄຟຟ້າ ແລະ ດຳເນີນການຕາມກົດໝາຍແລະກົດລະບຽບຕ່າງໆ ຂອງບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຜ-ຟຟລ ມີທຶນຈົດທະບຽນ ຈຳນວນ 6.717,21 ຕື້ກີບ ແລະ ມີຮຸ້ນສາມັນ ເທົ່າກັບ 1.679.303.697 ຮຸ້ນ (ໜຶ່ງພັນຫົກຮ້ອຍເຈັດສິບເກົ້າລ້ານ ສາມແສນສາມພັນຫົກຮ້ອຍເກົ້າສິບເຈັດຮຸ້ນ). ຜົນການດຳເນີນທຸລະກິດໃນປີ 2020 ສາມາດສັງລວມໄດ້ດັ່ງນີ້:

- ກຳລັງຕິດຕັ້ງທັງໝົດມີ 1.649 MW, ໃນນີ້ 699 MW ແມ່ນ 10 ເຂື່ອນໄຟຟ້າພະລັງງານນ້ຳຢູ່ໃນການຄຸ້ມຄອງຂອງ ຜ-ຟຟລ ແລະ 930,8 MW ແມ່ນການເຂົ້າຖືຮຸ້ນໃນເຂື່ອນໄຟຟ້າພະລັງງານນ້ຳ ຂອງຜູ້ຜະລິດໄຟຟ້າເອກະລາດ ຈຳນວນ 14 ເຂື່ອນ ແລະ 19,2 MW ແມ່ນການຖືຮຸ້ນໂຄງການໄຟຟ້າພະລັງງານແສງຕາເວັນ.
- ການຜະລິດພະລັງງານໄຟຟ້າ ໄດ້ທັງໝົດ 6.014,90 GWh.
- ລາຍຮັບ ລວມທັງໝົດ ເທົ່າກັບ 1.675,01 ຕື້ກີບ.
- ລາຍຈ່າຍ ລວມທັງໝົດ ເທົ່າກັບ 1.496,24 ຕື້ກີບ.
- ກຳໄລສຸດທິ ເທົ່າກັບ 178,77 ຕື້ກີບ.
- ການມອບພັນທະ ແລະ ອາກອນຕ່າງໆໃຫ້ລັດຖະບານ ເທົ່າກັບ 46,47 ຕື້ກີບ
- ຈຳນວນບຸກຄະລາກອນ ມີທັງໝົດ 773 ຄົນ, ເປັນເພດຍິງ 124 ຄົນ; ໃນປີທີ່ຜ່ານມາ ຜ-ຟຟລ ໄດ້ພັດທະນາບຸກຄະລາກອນ ແລະ ຍົກລະດັບວິຊາສະເພາະ, ຝຶກອົບຮົມພາຍໃນແລະຕ່າງປະເທດ ທັງໝົດ 1.029 ເທື່ອຄົນ.
- ອີງໃສ່ສັນຍາສຳປະທານ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ກໍໄດ້ເອົາໃຈໃສ່ໃນ ວຽກງານສັງຄົມ ແລະ ສິ່ງແວດລ້ອມ ເຊິ່ງເປັນພັນທະຂອງບໍລິສັດທີ່ຕ້ອງໄດ້ປະຕິບັດ, ເຊິ່ງພາຍໃນປີທີ່ຜ່ານມາ ສາມາດຈັດຕັ້ງປະຕິບັດວຽກງານດັ່ງກ່າວ ລວມມູນຄ່າທັງໝົດ 1,89 ຕື້ກີບ.
- ວຽກງານນິຕິກຳການລົງທຶນທີ່ໄດ້ຈັດຕັ້ງປະຕິບັດພາຍໃນປີທີ່ຜ່ານມາ ປະກອບມີ: ກະກຽມລົງນາມສັນຍາສຳປະທານກັບລັດຖະບານ ສຳລັບໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່; ກະກຽມການໂອນໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍຈັກເບີ 7 ແລະ 8; ກະກຽມລາຍການຊັບສິນ

ການໂອນໂຄງການເຂື່ອນໄຟຟ້າທີ່ ຜຟລ ລົງທຶນ 100% ຂອງ ເຂື່ອນໄຟຟ້ານ້ຳຈຽນ, ເຊເສັດ3 ແລະ ນ້ຳຄານ 3.

- ວຽກງານການລະດົມທຶນຂອງ ຜ-ຟຟລ ແມ່ນໄດ້ສຳເລັດການເຊັນສັນຍາສິນເຊື່ອກັບ ທະນາຄານຫວຽດຕິນ ລາວ ຈຳກັດ ມູນຄ່າ 190 ຕື້ກີບ ເພື່ອເປັນເງິນທຶນໝຸນວຽນເສີມສະພາບຄ່ອງໃຫ້ແກ່ບໍລິສັດ.

ໃນປີ 2021, ບໍລິສັດຈະສືບຕໍ່ປະຕິບັດວຽກງານ ແລະ ດຳເນີນທຸລະກິດ ໂດຍອີງຕາມນະໂຍບາຍ ຊັດເຈນຂອງບໍລິສັດ ແລະ ສືບຕໍ່ວາງແຜນການດຳເນີນທຸລະກິດ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ກຳລັງຕິດຕັ້ງການຜະລິດທັງໝົດ 1.888 MW ເຊິ່ງລວມເອົາ 886 MW ຈາກ 13 ເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ; 982,8 MW ຈາກ 16 ເຂື່ອນທີ່ບໍລິສັດເຂົ້າໄປຖືຮຸ້ນ; ແລະ 19,2 MW ຂອງໂຄງການພະລັງງານແສງອາທິດ.
- ແຜນການຜະລິດທັງໝົດ ຄາດໝາຍໃຫ້ໄດ້ 8.072,42 GWh.
- ແຜນການຈຳໜ່າຍພະລັງງານໄຟຟ້າ ລວມທັງໝົດ 8.018,79 GWh.
- ການລົງທຶນເຂົ້າໃນໂຄງການຕ່າງໆ ປະກອບມີ:

1) ເຂື່ອນໄຟຟ້ານ້ຳຜູນ ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 51% 23 MW
2) ເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 80% ເທົ່າກັບ 108 MW
3) ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 60% ເທົ່າກັບ 9 MW
4) ເຂື່ອນໄຟຟ້ານ້ຳດິກ 1, 2 ແລະ 3 ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 70% ເທົ່າກັບ 28 MW
5) ໂຄງການພາກຂະຫຍາຍແຊລະບຳ ກຳລັງຕິດຕັ້ງ 8 MW
6) ໂຄງການພາກຂະຫຍາຍເຊເສັດ 2 ກຳລັງຕິດຕັ້ງ 10 MW

- ຜ-ຟຟລ ມີພັນທະໃຫ້ລັດ ປະກອບດ້ວຍ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຈຳໜ່າຍກະແສໄຟຟ້າ, ອາກອນເງິນປັນຜົນ 10%, ອາກອນມູນຄ່າເພີ່ມ 10%, ອາກອນກຳໄລ ແລະ ອາກອນລາຍໄດ້ຂອງບຸກຄົນ.
- ຜ-ຟຟລ ຈະໄດ້ສືບຕໍ່ສ້າງວິຊາການຊຳນານງານ, ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ ແລະ ຝຶກອົບຮົມດ້ານການດຳເນີນທຸລະກິດການເງິນ, ບັນດາຂໍ້ກຳນົດກົດລະບຽບຂອງວຽກງານຕະຫຼາດຫຼັກຊັບ. ແຜນພັດທະນາບຸກຄະລາກອນຂອງ ຜ-ຟຟລ ໄດ້ກວມເອົາດ້ານການບໍລິຫານ, ດ້ານການເງິນ ແລະ ເຕັກນິກວິຊາການຕ່າງໆ ໂດຍມີແຜນຈັດສົ່ງເຂົ້າຝຶກອົບຮົມ ທີ່ສູນຝຶກ ຟຟລ ແລະ ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ.
- ຜ-ຟຟລ ສືບຕໍ່ປະກອບສ່ວນໃຫ້ມີການພັດທະນາ ແລະ ຄວາມຍືນຍົງ ຕໍ່ກັບສັງຄົມ ແລະ ທຳມະຊາດແວດລ້ອມບໍລິເວນເຂື່ອນ, ໃນປີ 2021 ຜ-ຟຟລ ມີແຜນວຽກງານສິ່ງແວດລ້ອມ-ສັງຄົມ ໂດຍແບ່ງອອກເປັນ 2 ພາກສ່ວນ ຄື: (1) ການປະຕິບັດພັນທະຕາມສັນຍາສຳປະທານເຊັ່ນ: ວຽກງານຄຸ້ມຄອງອ່າງໂຕ່ງ, ວຽກງານຄຸ້ມຄອງສິ່ງແວດລ້ອມອ້ອມຂ້າງເຂື່ອນ ແລະ ຄຸ້ມຄອງຄຸນນະພາບນ້ຳ; (2) ການປະກອບສ່ວນຕໍ່ສັງຄົມ ແລະ ພັດທະນາຊຸມຊົນອ້ອມຂ້າງເຂື່ອນ ໂດຍການມີສ່ວນຮ່ວມຂອງຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ.

ລາຍລະອຽດໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ຜູ້ຖືຮຸ້ນໄດ້ຮັບຊາບໃນເວັບໄຊ໌ທ ຂອງຕະຫຼາດຫຼັກຊັບລາວ ແລະ ເວັບໄຊ໌ທ ຂອງ ບໍລິສັດແລ້ວ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ອະນຸມັດເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ລວມທັງລາຍງານການເງິນຂອງບໍລິສັດ ປີ 2020 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2021.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ສະເໜີຫຍໍ້ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແລະ ມີຜູ້ຖືຮຸ້ນ ມີຄຳເຫັນຕໍ່ວາລະ 4 ດັ່ງນີ້:

- **ຈາກຜູ້ຖືຮຸ້ນ: ທ່ານ ກ້າ ໄຟດ່ຳງລໍເບຣຍຢາວ**
  1. ຜົນກຳໄລຈາກການລົງທຶນໃນບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດ ຈຳນວນ 498,70 ຕື້, ຜ-ຟຟລ ນັບເປັນຜົນກຳໄລແນວໃດ?
  2. ລາຍຈ່າຍຂາດທຶນອັດຕາແລກປ່ຽນແມ່ນມີຄວາມໝາຍວ່າແນວໃດ?
  3. ການລະບາດຂອງພະຍາດໂຄວິດ-19 (Covid-19) ມີຜົນກະທົບຕໍ່ກັບຜົນການດຳເນີນທຸລະກິດຂອງ ຜ-ຟຟລ ແນວໃດ ແລະ ການຫຼຸດຄ່າໄຟຟ້າຂອງລັດວິສາຫະກິດໄຟຟ້າລາວ ມີຜົນກະທົບຕໍ່ ຜ-ຟຟລ ແນວໃດ?

- **ຜູ້ຖືຮຸ້ນຕາງໜ້າຈາກ ບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ.**
  1. ການຂະຫຍາຍເຂື່ອນໄຟຟ້າຂອງ ຜ-ຟຟລ ໂດຍສະເພາະແມ່ນ ໂຄງການເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 ມີ ແນວທາງຈະຂາຍໄຟຟ້າໃຫ້ ຟຟລ ຫຼື ຕ່າງປະເທດ? ຖ້າຂາຍໃຫ້ ຟຟລ, ຜ-ຟຟລ ຍັງຈະສືບຕໍ່ດຳເນີນການ ໂຄງການດັ່ງກ່າວບໍ່? ຜ-ຟຟລ ມີທຶນພຽງພໍ ທີ່ຈະສ້າງໂຄງການດັ່ງກ່າວແລ້ວບໍ່? ແລະ ໂຄງການດັ່ງກ່າວມີ ມູນຄ່າເທົ່າໃດ?

     ຕໍ່ກັບຄຳຖາມຈາກຜູ້ຖືຮຸ້ນດັ່ງກ່າວຂ້າງເທິງ ຜູ້ອຳນວຍການໃຫຍ່ ຜ-ຟຟລ ໄດ້ມອບໃຫ້ ຮອງ ອຳນວຍການສາຍງານການເງິນ ປະກອບຄຳເຫັນ ທີ່ຜູ້ຖືຮຸ້ນໄດ້ກ່າວມານັ້ນວ່າ:
     - ຜົນກຳໄລຈາກການລົງທຶນໃນບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດ ແມ່ນກຳໄລຕາມສັດສ່ວນ ຂອງ ຜ-ຟຟລ ທີ່ເຂົ້າໄປຖືຮຸ້ນ ຕາມຫຼັກການບັນຊີ Equity Method, ເມື່ອ ຜ-ຟຟລ ເຂົ້າໄປລົງທຶນ ຮ່ວມກັບ IPP ແມ່ນເຮົາຈະຮັບຮູ້ຜົນກຳໄລຂອງ IPP ຊຶ່ງຈະຕ້ອງສະແດງໃນໃບລາຍງານການເງິນ ຕາມຫຼັກການບັນຊີສາກົນ.
     - ລາຍຈ່າຍຂາດທຶນອັດຕາແລກປ່ຽນ ເກີດມາຈາກການເໜັງຕີງຂອງຄ່າເງິນ ເນື່ອງຈາກຕົວເລກການ ກູ້ຢືມເງິນຂອງ ຜ-ຟຟລ ສ່ວນຫຼາຍເປັນສະກຸນເງິນຕ່າງປະເທດ (ສະກຸນເງິນບາດ ແລະ ເງິນໂດລາ ສະຫະລັດ); ໃນການບັນທຶກບັນຊີຂອງ ຜ-ຟຟລ ຕ້ອງໄດ້ບັນທຶກ ແລະ ລາຍງານເປັນສະກຸນເງິນ ກີບ. ສະນັ້ນ, ການສະຫຼຸບບັນຊີທຸກຄັ້ງຕ້ອງໄດ້ຄິດໄລ່ມາເປັນເງິນກີບ ເຊິ່ງເປັນການຂາດທຶນຈາກ ການແລກປ່ຽນ ບໍ່ແມ່ນການຂາດທຶນຈາກກະແສເງິນສົດ.
     - ຜົນກະທົບຂອງການລະບາດຂອງພະຍາດໂຄວິດ Covid-19 ຕໍ່ບໍລິສັດ ແມ່ນມີໜ້ອຍຫຼາຍ ຊຶ່ງການ ຜະລິດ ແລະ ການຈຳໜ່າຍກະແສໄຟຟ້າ ແມ່ນ ບໍລິສັດມີສັນຍາການຊື້-ຂາຍໄຟຟ້າ ລະຫວ່າງ ຜ-ຟຟລ ແລະ ລັດວິສາຫະກິດໄຟຟ້າລາວ ຊຶ່ງບໍ່ກ່ຽວກັບການຂາຍໄຟຟ້າຂອງລັດວິສາຫະກິດໄຟຟ້າ ລາວ ທີ່ຈຳໜ່າຍໃຫ້ຜູ້ຊົມໃຊ້ທົ່ວໄປ ຊຶ່ງຜົນກະທົບດັ່ງກ່າວຍັງບໍ່ທັນສະແດງເປັນຜົນກະທົບທີ່ໃຫຍ່ ຫຼວງສຳລັບ ຜ-ຟຟລ.
     - ສຳລັບໂຄງການເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 ແມ່ນມີສັນຍາກັບທະນາຄານ ICBC ຢູ່ແລ້ວ. ຜ-ຟຟລ ກຳລັງວິໄຈ ແລະ ສຶກສາຕະຫຼາດໃນການຂາຍໄຟ ແຕ່ຍັງບໍ່ທັນໄດ້ຕັດສິນໃຈ.

ພ້ອມດຽວກັນນີ້, ທ່ານ ປະທານສະພາບໍລິຫານໄດ້ມີຄຳເຫັນຕື່ມຕໍ່ກັບຄຳເຫັນ, ຄຳຖາມ ແລະ ຂໍ້ສະເໜີຕ່າງໆທີ່ຜູ້ຖືຮຸ້ນໄດ້ກ່າວມານັ້ນວ່າ: ການລະບາດຂອງພະຍາດໂຄວິດ-19 (COVID-19) ມີຜົນກະທົບໜຶ່ງຢ່າງຕໍ່ ບໍລິສັດ ຊຶ່ງສະແດງໃຫ້ເຫັນຄື ລັດວິສາຫະກິດໄຟຟ້າລາວໄດ້ຫຼຸດລາຄາໄຟຟ້າໃນຊ່ວງການລະບາດຂອງພະຍາດ ໃນປີ 2020 ທີ່ຜ່ານມາ ແລະ ລູກຄ້າບາງລາຍກໍ່ບໍ່ຈ່າຍເງິນຄ່າໄຟຟ້າ, ຊຶ່ງການຊື້ໄຟຟ້າຂອງລັດວິສາຫະກິດໄຟຟ້າລາວ ມາສະໜອງໃຫ້ສັງຄົມ ຈຶ່ງບໍ່ສາມາດຈ່າຍເງິນຄືນໃຫ້ບັນດາໂຄງການຜະລິດໄຟຟ້າ ກໍ່ຄືບໍລິສັດ. ແລະ ສຳລັບໂຄງການເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 ເປັນໂຄງການທີ່ສຳຄັນຫຼາຍ ແລະ ມີຄວາມສາມາດໃນການຜັດທະນາສິ່ງອອກໄດ້ຫຼາຍເສັ້ນທາງ ຄື: ປະເທດຫວຽດນາມ, ປະເທດກຳປູເຈຍ ແລະ ສິ່ງຂາຍໃຫ້ ຟຟລ ຊຶ່ງໂຄງການດັ່ງກ່າວຕັ້ງຢູ່ທາງພາກໃຕ້ຈຶ່ງມີທ່າແຮງຫຼາຍ. ດ້ວຍສະພາບທາງເສດຖະກິດໃນອະນາຄົດ ທີ່ມີທ່າງແຮງທີ່ສູງຂຶ້ນ. ສະເໜີໃຫ້ ຜ-ຟຟລ ຕັດສິນໃຈໃນການເລືອກເສັ້ນທາງ ເພື່ອດຳເນີນໂຄງການດັ່ງກ່າວໂດຍໄວ. ຖ້າແຫຼ່ງທຶນເກົ່າບໍ່ສາມາດຍອມຮັບໄດ້ ຄວນຊອກແຫຼ່ງທຶນໃໝ່ ໃນການຜັດທະນາ ແລະ ເປັນເລື່ອງເຮົາຕ້ອງໄດ້ຮ່ວມກັນແກ້ໄຂຕໍ່ໄປ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2020 ລວມທັງລາຍງານການເງິນຂອງບໍລິສັດ ປີ 2020 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2021, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງ **ຫຼາຍກວ່າເຄິ່ງໜຶ່ງ** ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງ ບໍລິສັດ ປີ 2020 ລວມທັງລາຍງານການເງິນຂອງບໍລິສັດ ປີ 2020 ແລະ ແຜນການດຳເນີນທຸລະກິດ ຂອງບໍລິສັດປີ 2021 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ 1.501.489.509 ສຽງ, ເທົ່າກັບ 99,99891 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 16.400 ສຽງ, ເທົ່າກັບ 0,00109 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2020, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນ.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ກອງປະຊຸມ, ໂດຍອີງຕາມກົດລະບຽບຂອງບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫລັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ, ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2020 ເປັນຈຳນວນທັງໝົດ 178,77 ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2020 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈາກກຳໄລສະສົມໄວ້ໃນຊຸມປີຜ່ານມາ ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 23 ເມສາ 2021 ໃນອັດຕາຮຸ້ນລະ 100 ກີບ, ລວມເປັນເງິນປັນຜົນຈ່າຍທັງໝົດ 167,93 ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ 12 ພຶດສະພາ 2021.

ການສະເໜີຈ່າຍເງິນປັນຜົນຂອງບໍລິສັດ ແມ່ນຖືກປະຕິບັດຕາມນະໂຍບາຍການຈ່າຍເງິນປັນຜົນຂອງ ບໍລິສັດ ແລະ ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການ

ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2020, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນດັ່ງກ່າວ.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ສະເໜີຫຍໍ້ກ່ຽວກັບວາລະທີ 5 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້ ແລະ ມີຜູ້ຖືຮຸ້ນມີຄຳເຫັນຕໍ່ວາລະ 5 ດັ່ງນີ້:

- **ຄຳຖາມຈາກຜູ້ຖືຮຸ້ນ, ທ່ານ ກ້າ ໄຟດ່ຳງລໍເບຣຍຢາວ**: ການກຳນົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ແມ່ນອີງໃສ່ເງື່ອນໄຂໃດໃນການກຳນົດວັນດັ່ງກ່າວ?

  ແລະ ທ່ານ ປະທານສະພາບໍລິຫານໄດ້ມີຄຳເຫັນຕໍ່ກັບຄຳຖາມວ່າ: ການກຳນົດຈ່າຍເງິນປັນຜົນ ແມ່ນເປັນໄປຕາມລະບຽບຂອງບໍລິສັດຈົດທະບຽນກໍຄືລະບຽບຂອງສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວທີ່ໄດ້ວາງອອກ.

ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ສະເຫນີໃຫ້ກອງປະຊຸມພິຈາລະນາອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2020, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນ, ໃນນີ້ ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ ປະຈຳປີ 2020 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈາກກຳໄລສະສົມໄວ້ ໃນຊຸມປີຜ່ານມາ ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 23 ເມສາ 2021 ໃນອັດຕາ 100 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 167,93 ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ 12 ພຶດສະພາ 2021.
ກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ 1.501.505.909 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຮອງປະທານສະພາບໍລິຫານເພີ່ມ, ການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່, ການພົ້ນຕຳແໜ່ງຂອງກຳມະການສະພາບໍລິຫານ 01 ທ່ານ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ; ການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ເພີ່ມ.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ກອງປະຊຸມວ່າ: ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານບໍລິສັດໄດ້ດຳເນີນໄປຢ່າງຕໍ່ເນື່ອງ ແລະ ມີຫຼາຍພາກສ່ວນມີສ່ວນຮ່ວມ, ບໍລິສັດເຫັນສົມຄວນສະເໜີກອງປະຊຸມພິຈາລະນາອະນຸມັດເອົາການແຕ່ງຕັ້ງຮອງປະທານສະພາບໍລິຫານເພີ່ມ, ການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່, ການພົ້ນຕຳແໜ່ງຂອງກຳມະການສະພາບໍລິຫານ 01 ທ່ານ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ, ການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ເພີ່ມ. ໂດຍມີຊີວະປະຫວັດຫຍໍ້ໃນເອກະສານຄັດຕິດ ທີ່ໄດ້ຄັດຕິດໃນໜັງສືແຈ້ງເຊີນ ແລະ ໄດ້ເປີດເຜີຍໃນເວັບໄຊ ແລະ ມີລາຍຊື່ດັ່ງລຸ່ມນີ້:

1. ແຕ່ງຕັ້ງ ທ່ານ ປອ. ບຸນທະວີ ສີສຸພັນທອງ ອະດີດຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານສະພາບໍລິຫານເພີ່ມ ທັງເປັນກຳມະການສະພາບໍລິຫານອິດສະຫຼະ.
2. ແຕ່ງຕັ້ງ ທ່ານ ພົງສະຫວັດ ເສນາພອນ ປະທານສະພາບໍລິຫານບໍລິສັດພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນກຳມະການສະພາບໍລິຫານ.
3. ແຕ່ງຕັ້ງ ທ່ານ ສົມລັດ ເມກອາກາດ ຜູ້ອຳນວຍການບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນກຳມະການສະພາບໍລິຫານ.
4. ແຕ່ງຕັ້ງ ທ່ານ ກຸນລະພັນ ວົງນາທີ ຮອງຜູ້ອຳນວຍການ ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນຮອງຜູ້ອຳນວຍການໃຫຍ່ເພີ່ມ.
5. ອະນຸມັດໃຫ້ ທ່ານ ໂກມົນຈັນ ເພັດອາສາ ພົ້ນຈາກການເປັນກຳມະການສະພາບໍລິຫານ ຂອງບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ເນື່ອງຈາກໄດ້ຖືກແຕ່ງຕັ້ງໄປຮັບໜ້າທີ່ໃໝ່.

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານຜູ້ໃໝ່ ບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ເປັນຕົ້ນໄປ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການແຕ່ງຕັ້ງຮອງປະທານສະພາບໍລິຫານເພີ່ມ, ການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່, ການພົ້ນຕຳແໜ່ງຂອງກຳມະການສະພາບໍລິຫານ 01 ທ່ານ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ ລວມທັງການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ເພີ່ມ.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ສະເໜີຫຍໍ້ ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ, ສາມາດຖາມໄດ້ ແລະ ມີຜູ້ຖືຮຸ້ນມີຄຳເຫັນຕໍ່ວາລະ 6 ດັ່ງນີ້:

- **ຜູ້ຖືຮຸ້ນຕາງໜ້າຈາກບໍລິສັດ RATCH-LAO SERVICES COMPANY LIMITED:** ບໍລິສັດ RATCH-LAO SERVICES COMPANY LIMITED ຂໍສະເໜີມີສ່ວນຮ່ວມຢູ່ໃນຄະນະກຳມະການສະພາບໍລິຫານ ເພື່ອມີສ່ວນຮ່ວມໃນການພັດທະນາ ຜ-ຟຟລ ໃຫ້ຈະເລີນຮຸ່ງເຮືອງ ຕາມກົດໝາຍຕະຫຼາດຫຼັກຊັບແລ້ວ ຖ້າຜູ້ຖືຮຸ້ນລວມກັນມີຮຸ້ນກາຍ 5 ສ່ວນຮ້ອຍແມ່ນມີສິດສະເໜີ ເຂົ້າຮ່ວມເປັນຄະນະກຳມະການສະພາບໍລິຫານ.

- **ຄຳຖາມຈາກຜູ້ຖືຮຸ້ນ ທ່ານ ກ້າ ໄຟດ່າງລໍເບຣຍຢາວ:** ການເພີ່ມຄະນະກຳມະການສະພາບໍລິຫານເຂົ້າມາຮ່ວມໃນສະພາບໍລິຫານ ຜ-ຟຟລ, ຊຶ່ງໝາຍເຖິງຕົ້ນທຶນໃນການຈ້າງເພີ່ມ, ແລະ ຜ-ຟຟລ ມີການພິຈາລະນາແນວໃດ? ມີຂໍ້ໄດ້ປຽບ ແລະ ປະໂຫຍດແນວໃດຕໍ່ ຜ-ຟຟລ?

ແລະ ທ່ານ ຜູ້ອຳນວຍການໃຫຍ່ ຜ-ຟຟລ ໄດ້ມີຄຳເຫັນ ຕໍ່ກັບຄຳຖາມທີ່ຜູ້ຖືຮຸ້ນໄດ້ກ່າວມານັ້ນວ່າ: ຕາມການສະເໜີຂອງບໍລິສັດ RATCH-LAO SERVICES COMPANY LIMITED ແມ່ນເປັນໄປຕາມກົດລະບຽບຂອງສຳນັກງານຄຸ້ມຄອງຕະຫຼາດຫຼັກຊັບ ແລະ ການຄຸ້ມຄອງຂອງກະຊວງການເງິນ. ຜ-ຟຟລ ຂໍຮັບເອົາການສະເໜີໄປນຳສະເໜີຕາມຂັ້ນຕອນ. ສຳລັບການເພີ່ມຮອງປະທານສະພາບໍລິຫານ, ທ່ານ ປອ. ບຸນທະວີ ສີສຸພັນທອງ ແມ່ນເພື່ອມາປ່ຽນແທນ ທ່ານ ໂກມົນຈັນ ເພັດອາສາ ທີ່ພົ້ນຈາກການເປັນກຳມະການສະພາບໍລິຫານ ເນື່ອງຈາກໄດ້ຖືກແຕ່ງຕັ້ງໄປຮັບໜ້າທີ່ໃໝ່. ພ້ອມດຽວກັນນີ້, ການເພີ່ມຄະນະກຳມະການສະພາບໍລິຫານອີກ 2 ທ່ານ ແມ່ນເປັນໄປຕາມລະບຽບຂອງສຳນັກງານຄຸ້ມຄອງຕະຫຼາດຫຼັກຊັບເຊັ່ນດຽວກັນ.

ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຮອງປະທານສະພາບໍລິຫານເພີ່ມ, ການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່, ການພົ້ນຕຳແໜ່ງຂອງກຳມະ

ການສະພາບໍລິຫານ 01 ທ່ານ ແລະ ການກຳນົດອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດ; ການແຕ່ງຕັ້ງ ຮອງຜູ້ອຳນວຍການໃຫຍ່ເພີ່ມ.ໃນນີ້ ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: **ກອງປະຊຸມໄດ້ມີມະຕິເຫັນດີອະນຸມັດການແຕ່ງຕັ້ງຮອງປະທານສະພາບໍລິຫານເພີ່ມ, ແຕ່ງຕັ້ງ ກຳມະການສະພາບໍລິຫານຜູ້ໃໝ່, ການພົ້ນຕຳແໜ່ງ ຂອງກຳມະການສະພາບໍລິຫານ 01 ທ່ານ ແລະ ການກຳນົດອາຍຸ ຂອງບັນດາກຳມະການ ສະພາບໍລິຫານບໍລິສັດຜູ້ໃໝ່; ການ ແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ເພີ່ມ, ດັ່ງມີລາຍຊື່ລຸ່ມນີ້:**

1) **ແຕ່ງຕັ້ງທ່ານ ປອ. ບຸນທະວີ ສີສຸພັນທອງ ອະດີດຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເປັນກຳມະການສະພາບໍລິຫານອິດສະຫຼະ ແລະ ເປັນຮອງປະທານ ສະພາບໍລິຫານເພີ່ມ.**
2) **ແຕ່ງຕັ້ງທ່ານ ພົງສະຫວັດ ເສນາພອນ ປະທານສະພາບໍລິຫານບໍລິສັດພົງຊັບທະວີກໍ່ສ້າງ ຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນກຳມະການສະພາ ບໍລິຫານ.**
3) **ແຕ່ງຕັ້ງທ່ານ ສົມລັດ ເມກອາກາດ ຜູ້ອຳນວຍການບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນກຳມະການສະພາບໍລິຫານ.**
4) **ແຕ່ງຕັ້ງທ່ານ ກຸນລະພັນ ວົງນາທີ ຮອງຜູ້ອຳນວຍການ ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວ ທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນຮອງຜູ້ອຳນວຍການໃຫຍ່ ເພີ່ມ.**
5) **ອະນຸມັດໃຫ້ທ່ານ ໂກມົນຈັນ ເພັດອາສາ ພົ້ນຕຳແໜ່ງການເປັນກຳມະການສະພາ ບໍລິຫານ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ເນື່ອງຈາກໄດ້ຖືກແຕ່ງຕັ້ງໄປຮັບ ໜ້າທີ່ໃໝ່.**

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານຜູ້ໃໝ່ທັງໝົດບໍ່ເກີນສອງປີ ໂດຍ ເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ເປັນຕົ້ນໄປ.

ກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າ ຮ່ວມກອງປະຊຸມດັ່ງນີ້:

- **ເຫັນດີຈຳນວນ 1.501.505.409 ສຽງ, ເທົ່າກັບ 99,99997 ສ່ວນຮ້ອຍ ຂອງ ຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 500 ສຽງ, ເທົ່າກັບ 0,00003 ສ່ວນຮ້ອຍ ຂອງຈຳນວນສຽງທັງ ໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 7. ພິຈາລະນາ ແລະ ອະນຸມັດ ການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ກອງປະຊຸມ ເນື່ອງຈາກມີການປ່ຽນແປງ ຄະນະສະພາບໍລິຫານຂອງ ບໍລິສັດ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານ ຂອງບໍລິສັດ ດຳເນີນການໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ສະເໜີກອງປະຊຸມພິຈາລະນາອະນຸມັດການດັດແກ້ເນື້ອໃນ ກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍ ກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ, ລາຍລະອຽດ ມີ ດັ່ງນີ້:

1) ດັດແກ້ມາດຕາ 9 ວ່າດ້ວຍກຳມະການ: ເພີ່ມຊື່ ແລະ ຂໍ້ມູນຂອງກຳມະການ 03 ທ່ານດັ່ງນີ້:

   1. ຊື່ ແລະ ນາມສະກຸນ: ທ່ານ ປອ. ບຸນທະວີ ສີສຸພັນທອງ, ສັນຊາດ: ລາວ; ທີ່ຢູ່ປະຈຸບັນ: ເຮືອນເລກທີ 216, ໜ່ວຍ 15, ບ້ານ ສະພານທອງໃຕ້, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ.

   2. ຊື່ ແລະ ນາມສະກຸນ: ທ່ານ ຝົງສະຫວັດ ເສນາພອນ, ສັນຊາດ: ລາວ;ທີ່ຢູ່ປະຈຸບັນ: ເຮືອນເລກທີ 88, ໜ່ວຍ 28, ບ້ານ ໜອງບົກໃຕ້, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ.

   3. ຊື່ ແລະ ນາມສະກຸນ: ທ່ານ ສົມລັດ ເມກອາກາດ, ສັນຊາດ: ລາວ; ທີ່ຢູ່ປະຈຸບັນ: ເຮືອນເລກທີ 722, ໜ່ວຍ 52, ບ້ານ ຕານມີໄຊ, ເມືອງ ໄຊທານີ, ແຂວງ ນະຄອນຫຼວງວຽງຈັນ.

2) ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ: ເພີ່ມຊື່ ແລະ ຂໍ້ມູນ ຂອງກຳມະການອິດສະຫຼະ ແລະ ຮອງປະທານ ສະພາບໍລິຫານເພີ່ມຄື:

   1. ຮອງປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ປອ. ບຸນທະວີ ສີສຸພັນທອງ

   ກຳມະການສະພາບໍລິຫານ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປັດຈຸບັນທັງໝົດມີ 11 ທ່ານ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດ ໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດ ດັດແກ້ເນື້ອໃນກົດ ລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກ ຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການດັດແກ້ກົດ ລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ, ພ້ອມດ້ວຍການມອບ ອຳນາດດັ່ງກ່າວຂ້າງເທິງ.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ສະເໜີຫຍໍ້ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳ ຖາມ.

ຈາກນັ້ນ ທ່ານ ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການດັດແກ້ ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ, ໃນນີ້ ກອງປະຊຸມຈະ ຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງ **ຫຼາຍກວ່າສອງສ່ວນສາມ (2/3)** ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ **ມີຮຸ້ນຮ່ວມກັນຢ່າງໜ້ອຍ 80%** ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ມະຕິ: ກອງປະຊຸມໄດ້ມີມະຕິເຫັນດີອະນຸມັດການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍ ກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ໂດຍມີລາຍລະອຽດດັ່ງນີ້:

1) ດັດແກ້ມາດຕາ 9 ວ່າດ້ວຍດ້ວຍກຳມະການ: ເພີ່ມຊື່ ແລະ ຂໍ້ມູນຂອງກຳມະການ 03 ທ່ານ ດັ່ງນີ້:

1. ຊື່ ແລະ ນາມສະກຸນ: ທ່ານ ປອ. ບຸນທະວີ ສີສຸພັນທອງ
- ສັນຊາດ: ລາວ; ທີ່ຢູ່ປະຈຸບັນ: ເຮືອນເລກທີ 216, ໜ່ວຍ 15, ບ້ານ ສະພານທອງໃຕ້, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ.
2. ຊື່ ແລະ ນາມສະກຸນ: ທ່ານ ພົງສະຫວັດ ເສນາພອນ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 88, ໜ່ວຍ 28, ບ້ານ ໜອງບຶກໃຕ້, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ.
3. ຊື່ ແລະ ນາມສະກຸນ: ທ່ານ ສົມລັດ ເມກອາກາດ
- ສັນຊາດ: ລາວ; ທີ່ຢູ່ປະຈຸບັນ: ເຮືອນເລກທີ 722, ໜ່ວຍ 52, ບ້ານ ຕານມີໄຊ, ເມືອງ ໄຊທານີ, ແຂວງ ນະຄອນຫຼວງວຽງຈັນ.

2) ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ: ເພີ່ມຊື່ ແລະ ຂໍ້ມູນຂອງກຳມະການອິດສະຫຼະ ແລະ ຮອງປະທານສະພາບໍລິຫານຄື: ທ່ານ ປອ. ບຸນທະວີ ສີສຸພັນທອງ. ແລະ ກຳມະການສະພາບໍລິຫານທັງໝົດມີ 11 ທ່ານ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫລາຍກວ່າ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ, ດັ່ງນີ້:

(ກ) ຈຳນວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 166 ຄົນ ເທົ່າກັບ 99,40 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີ 1 ຄົນ ເທົ່າກັບ 0,60 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 1.501.505.709 ຮຸ້ນ (ສຽງ), ເທົ່າກັບ 89,412398 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.
2. ບໍ່ເຫັນດີ 200 ຮຸ້ນ (ສຽງ), ເທົ່າກັບ 0,000012 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຖືວ່າໄດ້ພິຈາລະນາ ຄົບວາລະກອງປະຊຸມແລ້ວ, ແລະ ປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄຳຄິດເຫັນຕື່ມ ແລະ ຊັກຖາມຂໍ້ຂ້ອງໃຈອື່ນໆ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 27 ທ່ານ ແລະ ມີຜູ້ຕາງໜ້າເຂົ້າ

ຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ **140** ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ **167** ຄົນ ຖືຮຸ້ນລວມກັນ **1.501.505.909** ຮຸ້ນ ເທົ່າກັບ **89,41** ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ແລະ ຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນທຸກທ່ານ ທີ່ເຂົ້າຮ່ວມກອງປະຊຸມ ແລະ ຂໍອວຍພອນໄຊແດ່ ບັນດາຄະນະຜູ້ບໍລິຫານບໍລິສັດ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ຂໍອວຍພອນໄຊແດ່ ທ່ານ ຜູ້ຖືຮຸ້ນທຸກທ່ານ ແລະ ບັນດາແຂກທີ່ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 16:30 ໂມງ.

ປະທານກອງປະຊຸມ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ປອ. ຄຳມະນີ ອິນທິລາດ

ຮັບຮອງຖືກຕ້ອງ

ດວງສີ ພາຣາຍິກ

ລາຍງານການເງິນປະຈຳປີ 2021

ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ
ໃນວັນທີ 31 ທັນວາ 2021

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021	31 ທັນວາ 2020	31 ທັນວາ 2021	31 ທັນວາ 2020
		ລ້ານກີບ	ລ້ານກີບ	ລ້ານກີບ	ລ້ານກີບ
ຊັບສິນ					
ຊັບສິນບໍ່ໝຸນວຽນ					
ເງິນລົງທຶນ ໃນບໍລິສັດລູກ	6	-	-	619.680	619.680
ເງິນລົງທຶນ ໃນວິສາຫະກິດຮ່ວມ	7.1	5.151.967	5.190.681	5.151.967	5.190.681
ເງິນລົງທຶນ ໃນບໍລິສັດຮຸ້ນສ່ວນ	7.2	3.264.319	3.010.187	3.264.319	3.010.187
ເງິນລົງທຶນຫົວໄປ		375.688	-	375.688	-
ເງິນຈ່າຍລ່ວງໜ້າ ສຳລັບຊັບສິນຢູ່ພາຍໃຕ້ການສຳປະທານ ແລະ ເງິນລົງທຶນ	8, 24	1.973.406	1.973.406	2.002.701	1.999.754
ຊັບສິນຢູ່ພາຍໃຕ້ການສຳປະທານ, ສຸດທິ	9	8.975.510	9.436.044	8.466.878	8.896.788
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ		-	413	-	413
ໜີ້ຕ້ອງຮັບຈາກສັນຍາ swap		16.131	234.296	16.131	234.296
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ-ໂຄງການກໍ່ສ້າງ		341.075	341.075	-	-
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ้ำປະກັນ		-	63.211	-	63.211
ຊັບສິນທີ່ບໍ່ໝຸນວຽນອື່ນໆ		27.233	49.086	26.862	48.715
ລວມຊັບສິນບໍ່ໝຸນວຽນ		**20.125.329**	**20.298.399**	**19.924.226**	**20.063.725**
ຊັບສິນໝຸນວຽນ					
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	10	202.585	265.554	161.702	247.215
ເງິນລົງທຶນໄລຍະສັ້ນ	11	33.489	27.840	33.489	27.840
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	24	337.574	280.632	337.574	280.632
ໜີ້ຕ້ອງຮັບການຄ้ำ ແລະ ໜີ້ຕ້ອງຮັບອື່ນໆ	12	2.221.934	1.509.848	2.262.874	1.529.287
ສ່ວນທີ່ເຖິງກຳນົດຈ່າຍເງິນລ່ວງໜ້າສຳລັບສັນຍາແລກປ່ຽນ ອັດຕາດອກເບ້ຍ swap		-	11.867	-	11.867
ອາໄຫ່ ແລະ ເຄື່ອງໃນສາງ, ສຸດທິ		3.771	3.523	3.771	3.523
ຊັບສິນໝຸນວຽນອື່ນໆ		3.627.485	2.305.163	3.562.275	2.298.272
ລວມຊັບສິນໝຸນວຽນ		**6.426.838**	**4.404.427**	**6.361.685**	**4.398.636**
ລວມຍອດຊັບສິນ		**26.552.167**	**24.702.826**	**26.285.911**	**24.462.361**

ທ່ານ ດວງສີ ພາຮຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 29 ມີນາ 2022

ບິດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 13 ຫາ 49 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕ.ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ์:www.edlgen.com.la

ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ
ໃນວັນທີ 31 ທັນວາ 2021

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021	31 ທັນວາ 2020	31 ທັນວາ 2021	31 ທັນວາ 2020
		ລ້ານກີບ	ລ້ານກີບ	ລ້ານກີບ	ລ້ານກີບ
ທຶນ ແລະ ໜີ້ສິນ					
ທຶນ					
ທຶນຈົດທະບຽນ	13	6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ	13	985.621	985.621	985.621	985.621
ຄັງສະສົມຕາມລະບຽບການ	14	565.708	565.024	565.708	565.024
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ		134.944	34.022	134.944	34.022
ກຳໄລສະສົມ		823.602	987.824	866.804	1.028.574
ທຶນທີ່ເປັນສ່ວນບໍລິສັດ		**9.227.090**	**9.289.706**	**9.270.292**	**9.330.456**
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		3.504	4.014	-	-
ລວມທຶນ		**9.230.594**	**9.293.720**	**9.270.292**	**9.330.456**
ໜີ້ສິນ					
ໜີ້ສິນບໍ່ໝຸນວຽນ					
ເງິນກູ້ຢືມໄລຍະຍາວສຸດທິ	15	3.178.012	3.121.428	2.945.941	2.924.501
ຮຸ້ນກູ້ສຸດທິ	16	10.751.211	8.343.462	10.751.211	8.343.462
ລວມໜີ້ສິນບໍ່ໝຸນວຽນ		**13.929.223**	**11.464.890**	**13.697.152**	**11.267.963**
ໜີ້ສິນໝຸນວຽນ					
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		280.424	178.608	233.590	134.222
ເງິນກູ້ຢືມໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	15	1.669.676	1.091.095	1.646.699	1.058.644
ເງິນກູ້ຢືມໄລຍະສັ້ນສຸດທິ	15	106.739	98.505	106.739	98.505
ຮຸ້ນກູ້ໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	16	378.281	1.931.841	378.281	1.931.841
ລາຍຈ່າຍຄ້າງຈ່າຍ	17	955.765	643.041	951.693	639.604
ໜີ້ສິນໝຸນວຽນອື່ນໆ		1.465	1.126	1.465	1.126
ລວມຍອດໜີ້ສິນໝຸນວຽນ		**3.392.350**	**3.944.216**	**3.318.467**	**3.863.942**
ລວມຍອດໜີ້ສິນ		**17.321.573**	**15.409.106**	**17.015.619**	**15.131.905**
ລວມຍອດທຶນ ແລະ ໜີ້ສິນ		**26.552.167**	**24.702.826**	**26.285.911**	**24.462.361**

ທ່ານ ຄຳຈ່ຽ ພາຣະຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 29 ມີນາ 2022

ບິດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 13 ຫາ 49 ແມ່ນຖືກເຫັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ໃບລາຍງານຜົນໄດ້ຮັບແບບລວມ ແລະ ແບບແຍກ
ສຳລັບປີສິ້ນສຸດ 31 ທັນວາ 2021

	ຍິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021	31 ທັນວາ 2020	31 ທັນວາ 2021	31 ທັນວາ 2020
		ລ້ານກີບ	ລ້ານກີບ	ລ້ານກີບ	ລ້ານກີບ
ລາຍຮັບຈາກການຂາຍ		1.196.664	1.167.375	1.168.853	1.138.180
ຕົ້ນທຶນໃນການຂາຍ	18	(585.971)	(567.894)	(570.720)	(553.123)
ກຳໄລຂັ້ນຕົ້ນ		**610.693**	**599.481**	**598.133**	**585.057**
ລາຍຮັບອື່ນໆ		55.292	44.092	44.111	38.133
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	18	(154.090)	(198.319)	(139.577)	(181.978)
ກຳໄລ (ຂາດທຶນ) ສຸດທິ ຈາກອັດຕາແລກປ່ຽນ		(612.913)	(45.389)	(614.037)	(20.016)
ກຳໄລ ຂອງຮຸ້ນຈາກເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	7	960.715	498.703	960.715	498.703
ກຳໄລກ່ອນລາຍຈ່າຍທາງການເງິນ		**859.697**	**898.568**	**849.345**	**919.899**
ລາຍຈ່າຍທາງການເງິນ	19	(855.815)	(741.125)	(842.501)	(741.125)
ກຳໄລກ່ອນອາກອນກຳໄລ		**3.882**	**157.443**	**6.844**	**178.774**
ລາຍຈ່າຍອາກອນກຳໄລ	20	-	-	-	-
ກຳໄລໃນປີ		**3.882**	**157.443**	**6.844**	**178.774**
ສ່ວນຂອງກຳໄລທີ່ເປັນຂອງ:					
ສ່ວນຂອງບໍລິສັດແມ່		4.392	158.642	6.844	178.774
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(510)	(1.199)	-	-
		3.882	**157.443**	**6.844**	**178.774**
ກຳໄລຕໍ່ຮຸ້ນ					
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	21	2,62	94,49	4,08	106,48

ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 29 ມີນາ 2022

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 13 ຫາ 49 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ์:www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງຂອງທຶນເຮຍລວມ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2021

	ເອກະສານລາຍງານການເງິນແບບລວມ							
	ສ່ວນຂອງຜູ້ຖືຮຸ້ນບໍລິສັດ							
	ທຶນ ຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ ລ້ານກີບ	ກຳໄລສະສົມ ຍັງບໍ່ທັນໄດ້ ແບ່ງປັນ ລ້ານກີບ	ລວມ ລ້ານກີບ	ສ່ວນໄດ້ເສຍ ທີ່ບໍ່ມີອຳນາດ ໃນການຄວບຄຸມ ລ້ານກີບ	ລວມ ທຶນຂອງຜູ້ຖືຮຸ້ນ ລ້ານກີບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020								
ໃນວັນທີ 1 ມັງກອນ 2020	6.717.215	985.621	547.147	20.220	1.014.989	9.285.192	5.213	9.290.405
ກຳໄລໃນປີ	-	-	-	-	158.642	158.642	(1.199)	157.443
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	13.802	-	13.802	-	13.802
ຈ່າຍເງິນປັນຜົນ	-	-	-	-	(167.930)	(167.930)	-	(167.930)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	17.877	-	(17.877)	-	-	-
ຍອດເຫຼືອໃນວັນທີ 31 ທັນວາ 2020	**6.717.215**	**985.621**	**565.024**	**34.022**	**987.824**	**9.289.706**	**4.014**	**9.293.720**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021								
ໃນວັນທີ 1 ມັງກອນ 2021	6.717.215	985.621	565.024	34.022	987.824	9.289.706	4.014	9.293.720
ກຳໄລໃນປີ	-	-	-	-	4.392	4.392	(510)	3.882
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	100.922	-	100.922	-	100.922
ຈ່າຍເງິນປັນຜົນ	-	-	-	-	(167.930)	(167.930)	-	(167.930)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	684	-	(684)	-	-	-
ຍອດເຫຼືອໃນວັນທີ 31 ທັນວາ 2021	**6.717.215**	**985.621**	**565.708**	**134.944**	**823.602**	**9.227.090**	**3.504**	**9.230.594**

ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 29 ມີນາ 2022

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 13 ຫາ 49 ແມ່ນຖືວ່າເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກຫຼ່ານີ້.

ໂທລະສັບ/ໂທລະສານ (856-21) 316142 ໝໍ້ໄຕ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊ:www.edlgen.com.la
ໂທລະສັບ/ໂທລະສານ (856-21) 316142 ໝໍ້ໄຕ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊ:www.edlgen.com.la

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງຂອງທຶນເຮັດແຍກ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2021

	ເອກະສານລາຍງານການເງິນແຍກ					
	ທຶນ ຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ ລ້ານກີບ	ກຳໄລສະສົມ ຍັງບໍ່ທັນໄດ້ ແບ່ງປັນ ລ້ານກີບ	ລວມ ລ້ານກີບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020						
ໃນວັນທີ 1 ມັງກອນ 2020	6.717.215	985.621	547.147	20.220	1.035.607	9.305.810
ກຳໄລໃນປີ	-	-	-	-	178.774	178.774
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	13.802	-	13.802
ຈ່າຍເງິນປັນຜົນ	-	-	-	-	(167.930)	(167.930)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	17.877	-	(17.877)	-
ຍອດເຫຼືອໃນວັນທີ 31 ທັນວາ 2020	**6.717.215**	**985.621**	**565.024**	**34.022**	**1.028.574**	**9.330.456**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021						
ໃນວັນທີ 1 ມັງກອນ 2021	6.717.215	985.621	565.024	34.022	1.028.574	9.330.456
ກຳໄລໃນປີ	-	-	-	-	6.844	6.844
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	100.922	-	100.922
ຈ່າຍເງິນປັນຜົນ	-	-	-	-	(167.930)	(167.930)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	684	-	(684)	-
ຍອດເຫຼືອໃນວັນທີ 31 ທັນວາ 2021	**6.717.215**	**985.621**	**565.708**	**134.944**	**866.804**	**9.270.292**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ທ່ານ ດາວສີ ພາທາຍິກາ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 29 ມີນາ 2022

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 13 ຫາ 49 ແມ່ນຖືວ່າເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ໂທລະທັບ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ບ້ານທົ່ງໂດ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ສປປລາວ. ຫຼັ.ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ์:www.edlgen.com.la

	ຍຶດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ	31 ທັນວາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ					
ກຳໄລກ່ອນອາກອນກຳໄລໃນປີ		3.882	157.443	6.844	178.774
ປັບປຸງ :					
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ		520.357	515.932	505.732	504.669
ຕັດຄອບລາຍຈ່າຍຕົ້ນທຶນການອອກຊຸ້ນກູ້		24.040	62.761	24.040	62.761
ຂາດທຶນຈາກການສະສາງຊັບສິນຢູ່ພາຍໃຕ້ສຳປະທານ		28.116	22.657	28.099	22.657
ລາຍຮັບຈາກດອກເບ້ຍ		(15.680)	(18.012)	(15.680)	(18.012)
ລາຍຈ່າຍທາງການເງິນ		855.815	741.125	842.501	741.125
ກຳໄລຂອງຊຸ້ນຈາກເງິນລົງທຶນໃນວິສາຫະກິດຂາຊຸ້ນ ແລະ ບໍລິສັດຊຸ້ນສ່ວນ	7	(960.715)	(498.703)	(960.715)	(498.703)
ການປ່ຽນແປງທຶນໝຸນວຽນ:		**455.815**	**983.203**	**430.821**	**993.271**
ຫຼຸດລົງ/(ເພີ່ມຂຶ້ນ) ໃນ					
ຊັບສິນທີ່ບໍ່ໝຸນວຽນອື່ນໆ		21.853	(46.625)	21.853	(46.254)
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ້ຳປະກັນ		63.354	41.868	63.354	41.868
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(590.295)	(957.587)	(611.796)	(967.765)
ອາໄຫຼ່ ເຄື່ອງໃນສາງ		(248)	648	(248)	648
ຊັບສິນໝຸນວຽນອື່ນໆ		295.725	53.772	287.476	35.897
ໜີ້ຕ້ອງສົ່ງຜູ້ສະໜອງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		59.196	20.963	78.951	25.176
ລາຍຈ່າຍຄ້າງຈ່າຍ		239.857	67.917	239.222	65.694
ໜີ້ສິນໝຸນວຽນອື່ນໆ		339	(157)	339	199
ເງິນສົດທີ່ໃຊ້ໃນ ກິດຈະກຳການດຳເນີນງານ		545.596	164.002	509.972	148.734
ຈ່າຍດອກເບ້ຍ		(599.595)	(524.777)	(586.281)	(525.658)
ກະແສເງິນສົດຈາກກິດຈະກຳການດຳເນີນງານສຸດທິ		**(53.999)**	**(360.775)**	**(76.309)**	**(376.924)**
ກະແສເງິນສົດທີ່ໃຊ້ໃນກິດຈະກຳການລົງທຶນ					
ເງິນຈ່າຍລ່ວງໜ້າ ສຳລັບຊັບສິນຢູ່ພາຍໃຕ້ການສຳປະທານ ແລະ ເງິນລົງທຶນ		-	-	-	(271)
ຈ່າຍເງິນລົງທຶນໃນບໍລິສັດລູກ		-	-	-	(24.417)
ຮັບເງິນຈາກເງິນລົງທຶນຈ່າຍລ່ວງໜ້າໃນບໍລິສັດລູກ		-	-	-	36.447
ເງິນລົງທຶນໃນວິສາຫະກິດຂາຊຸ້ນ ແລະ ບໍລິສັດຊຸ້ນສ່ວນ	7	(4.941)	(7.837)	(4.941)	(7.837)
ຈ່າຍເງິນສົດສຳລັບຊື້ຊັບສິນຢູ່ພາຍໃຕ້ສັນຍາສຳປະທານ		(87.526)	(98.009)	(103.508)	(51.602)
ຮັບເງິນໃຫ້ພາກສ່ວນທີ່ກ່ຽວຂ້ອງກູ້ຢືມໄລຍະສັ້ນ		-	136.183	-	136.183
ຮັບເງິນປັນຜົນຈາກເງິນລົງທຶນໃນວິສາຫະກິດຂາຊຸ້ນ ແລະ ບໍລິສັດຊຸ້ນສ່ວນ	7	475.472	154.540	475.472	154.540
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**383.005**	**184.877**	**367.023**	**243.043**

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 13 ຫາ 49 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກຫຼ່ານີ້.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ໃບລາຍງານກະແສເງິນສົດແບບລວມ ແລະ ແບບແຍກ
ສຳລັບປີສິ້ນສຸດ 31 ທັນວາ 2021

	ຫຍໍ້ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ	31 ທັນວາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ
ກະແສເງິນສົດຈາກກິດຈະກຳທາງການເງິນ					
ລາຍຈ່າຍເງິນປັນຜົນ		(167.930)	(167.930)	(167.930)	(167.930)
ຮັບເງິນສົດຈາກການກູ້ຢືມໄລຍະສັ້ນ	15	682.253	98.239	682.253	98.239
ຊຳລະເງິນກູ້ຢືມໄລຍະສັ້ນ	15	(726.149)	(204.418)	(726.149)	(204.418)
ຮັບເງິນສົດຈາກການກູ້ຢືມໄລຍະຍາວ	15	-	29.441	-	-
ຊຳລະເງິນກູ້ຢືມໄລຍະຍາວ	15	(176.185)	(268.567)	(157.500)	(268.567)
ຮັບເງິນສົດຈາກການອອກຊັ້ນກູ້	16	1.905.346	-	1.905.346	-
ຊຳລະຊັ້ນກູ້	16	(1.951.667)	-	(1.951.667)	-
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳທາງການເງິນ		**(434.332)**	**(513.235)**	**(415.647)**	**(542.676)**
ການເພີ່ມຂຶ້ນ/(ຫຼຸດລົງ) ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(105.326)	(689.133)	(124.933)	(676.557)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ໃນຕົ້ນປີ		265.554	979.774	247.215	948.847
ຜົນກະທົບຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		42.357	(25.087)	39.420	(25.075)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ		**202.585**	**265.554**	**161.702**	**247.215**
ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ					
ໜີ້ຕ້ອງສົ່ງຊື້ຊັບສິນພາຍໃຕ້ສຳປະທານ		67.582	34.317	67.582	16.211
ຫັກລົ້ງ ກັບບັນຊີໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ກັບ					
- ຈ່າຍເງິນປັນຜົນ		-	125.948	-	125.948
- ເງິນກູ້ໄລຍະຍາວກັບພາກສ່ວນທີ່ກ່ຽວຂ້ອງ		-	8.288	-	8.288
- ລາຍຈ່າຍດອກເບ້ຍຄ້າງຈ່າຍ		-	338	-	338
ຫັກລົ້ງ ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ ກັບ ການຊຳລະຄືນເງິນກູ້ຢືມ	15	-	58.834	-	58.834
ຫັກລົ້ງ ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ ກັບ ລາຍຈ່າຍດອກເບ້ຍຄ້າງຈ່າຍ		-	1.926	-	1.926
ໂອນຈາກເງິນຈ່າຍລ່ວງໜ້າສຳລັບຊັບສິນຢູ່ພາຍໃຕ້ການສຳປະທານ ແລະ ການລົງທຶນມາເປັນ					
- ເງິນລົງທຶນໃນບໍລິສັດລູກ			-		-
- ເງິນລົງທຶນໃນວິສາຫະກິດຮ່ວມ		-	244.474	-	244.474
- ເງິນລົງທຶນໃນບໍລິສັດຮ່ວມ		-	-		-
- ຊັບສິນຢູ່ພາຍໃຕ້ການສຳປະທານ		-	-		-

ທ່ານ ດວງສີ ພາຣາຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 29 ມີນາ 2022

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 13 ຫາ 49 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

ຊີວະປະຫວັດຫຍໍ້ ຂອງ ຄະນະສະພາບໍລິຫານຜູ້ໃໝ່

ຊີວະປະຫວັດຫຍໍ້ຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ

ຊື່ ແລະ ນາມສະກຸນ: ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ

ວັນ/ເດືອນ/ປີເກີດ: 24/11/1966

ອາຍຸ: 56 ປີ

ທີ່ຢູ່ປັດຈຸບັນ: ບ້ານ ໂພນສະຫວັນໃຕ້, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ

ຄວາມຮູ້ພາສາຕ່າງປະເທດ: ພາສາອັງກິດ, ພາສາລັດເຊຍ

ລະດັບວິຊາສະເພາະສູງສຸດ: ປະລິນຍາເອກ ດ້ານວິຊາເສດຖະສາດ, ມະຫາວິທະຍາໄລແຫ່ງຊາດອິດສະຕາລີ, ແຄນເບີຣາ, ປະເທດອິດສະຕາລີ

ປະສົບການໃນການເຮັດວຽກ:

1990-1993	ອາຈານສອນຢູ່ທີ່ມະຫາວິທະຍາໄລແຫ່ງຊາດລາວ
1993-1998	ວິຊາການຄັງເງິນແຫ່ງຊາດ, ກະຊວງການເງິນ
	ຮອງຫົວໜ້າພະແນກບັນຊີ-ສັງລວມ, ຄັງເງິນແຫ່ງຊາດ, ກະຊວງການເງິນ
	ຫົວໜ້າພະແນກນະໂຍບາຍເສດຖະກິດ-ການເງິນ, ກົມນະໂຍບາຍການເງິນ, ກະຊວງການເງິນ
2007-2010	ຮອງຫົວໜ້າກົມການເງິນຕ່າງປະເທດ, ກະຊວງການເງິນ
2010-2012	ສະມາຊິກສະພາບໍລິຫານ ທະນາຄານພັດທະນາອາຊີ (ADB) ຮັບຜິດຊອບປະເທດອັຟການິ ສະຖານ, ບັງກະລາເທດ, ພູຖານ, ອິນເດຍ, ສປປ ລາວ, ຕາຈິກິສະຖານ ແລະ ເຕີກເມນິສະຖານ ປະຈຳຢູ່ສຳນັກງານໃຫຍ່ທະນາຄານພັດທະນາອາຊີ, ມະນີລາ, ປະເທດຟີລິບປິນ
2013-2014	ຫົວໜ້າກົມນະໂຍບາຍການເງິນ, ກະຊວງການເງິນ
2014-2016	ຫົວໜ້າກົມງົບປະມານແຫ່ງລັດ, ກະຊວງການເງິນ
04-12/2016	ເລຂານຸການ ທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ
2016-2019	ຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງການເງິນ
2020-ປັດຈຸບັນ	ຮອງລັດຖະມົນຕີກະຊວງການເງິນ

- ປັດຈຸບັນເປັນສະພາບໍລິຫານຢູ່ 02 ບໍລິສັດ:
  1) ປະທານສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
  2) ປະທານສະພາບໍລິຫານ ບໍລິສັດ ອາລີອັນສ໌ ປະກັນໄພລາວ (AGL)

ຊີວະປະຫວັດຫຍໍ້ຂອງ ທ່ານ ສົມພົດ ແກ້ວວິຈິດ

ຊື່ ແລະ ນາມສະກຸນ: ທ່ານ ສົມພົດ ແກ້ວວິຈິດ
ວັນ/ເດືອນ/ປີ/ເກີດ: 01/05/1968
ອາຍຸ: 54 ປີ
ສັນຊາດ: ລາວ
ທີ່ຢູ່ປັດຈຸບັນ: ບ້ານ ໂພນສະຫວາດໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ: - ປະລິນຍາຕີສາຂາ ວິສະວະກຳກົນຈັກ ຢູ່ມະຫາວິທະຍາໄລແຫ່ງຊາດລາວ.

<u>ການເຝິກອົບຮົມ:</u>

08-11/1994	ພາສາອັງກິດລະດັບກາງຢູ່ສະຖານທູດອັງກິດ ປະຈຳວຽງຈັນ ຈັດໂດຍກະຊວງການຕ່າງປະເທດ
06-07/1996	ຄູຝຶກກ່ຽວກັບການສ້າງ ແລະ ສົ່ງເສີມຜູ້ປະກອບການທຸລະກິດໃໝ່ ຈັດໂດຍອົງການ GTZ
03-05/1997	ພາສາອັງກິດລະດັບສູງ, ສະຖາບັນອັງກິດ ປະຈຳວຽງຈັນພາຍໃຕ້ການຊ່ວຍເຫຼືອຂອງລັດຖະບານອັງກິດ
09-12/1997	ພາສາອັງກິດລະດັບກ້າວໜ້າຢູ່ສູນຝຶກອົບຮົມ SEAMEO ທີ່ປະເທດສິງກະໂປ
09/1999	ການຂຽນບົດສະເໜີໂຄງການພັດທະນາທີ່ຫົວຫີນ, ປະເທດໄທ
01/2000	Public Sector Reform ທີ່ສະຖາບັນແມ່ນ້ຳຂອງສາກົນ, ມະຫາວິທະຍາໄລຂອນແກ່ນ
03-04/2000	Office Automatic Utilization ທີ່ປະເທດອິນເດຍ
08-11/2000	ທິດສະດີການເມືອງ ແລະ ການປົກຄອງ 45 ວັນ ຈັດໂດຍກະຊວງອຸດສາຫະກຳ ແລະ ຫັດຖະກຳ
11/2001	ການພັດທະນາ ແລະ ການຄຸ້ມຄອງຊອບແວຄອມພິວເຕີ້, ນະຄອນຊຽງໄຮ້, ປະເທດ ສປ ຈີນ
10/2009	ການພັດທະນາ ແລະ ການຄຸ້ມຄອງພະລັງງານໄຟຟ້າໃນຕົວເມືອງທີ່ປະເທດ ສ.ເກົາຫຼີ
06-07/2010	ການສົ່ງເສີມການພັດທະນາພະລັງງານໄຟຟ້ານ້ຳຕົກ, ນະຄອນໂຕກຽວ, ປະເທດຍີ່ປຸ່ນ
08-09/2011	ການຮ່ວມມືພາກລັດ ແລະ ເອກະຊົນເພື່ອພັດທະນາພື້ນຖານໂຄ່ງລ່າງ, ປະເທດຝຣັ່ງ
09/2013	Power Purchase Agreement, ປະເທດສິງກະໂປ
10/2017	Leadership: Leading for Change Management, ບອດສຕັນ, ສະຫະລັດອາເມລິກາ

<u>ປະສົບການເຮັດວຽກ:</u>

10/1993-1997	ວິຊາການພະແນກສະຖິຕິ-ແຜນການ ແລະ ສັງລວມ, ຫ້ອງການກະຊວງອຸດສາຫະກຳແລະ ຫັດຖະກຳ
1997	ເລຂາລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ຫັດຖະກຳ
04/2000	ຮອງຫົວໜ້າພະແນກຄຸ້ມຄອງບໍລິຫານ, ກະຊວງອຸດສາຫະກຳແລະ ຫັດຖະກຳ
10/2004	ຫົວໜ້າພະແນກເລຂານຸການ ແລະ ພິທີການ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ
08/2006	ເລຂາລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ
03/2007	ຫົວໜ້າພະແນກເລຂານຸການ ແລະ ພິທີການ, ກະຊວງອຸດສາຫະກຳ ແລະ ການຄ້າ
07/2010	ຮອງຫົວໜ້າພະແນກພັດທະນາ ແລະ ຕິດຕາມໂຄງການ, ກົມທຸລະກິດພະລັງງານ
02/2012	ຫົວໜ້າພະແນກພັດທະນາ ແລະ ຕິດຕາມໂຄງການ, ກົມທຸລະກິດພະລັງງານ
2013-2018	ຮອງຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2019-ປັດຈຸບັນ	ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2020-ປັດຈຸບັນ	ກຳມະການສະພາບໍລິຫານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

❖ ປັດຈຸບັນເປັນສະພາບໍລິຫານ 01 ບໍລິສັດຄື: 1) ລັດວິສາຫະກິດຖືຮຸ້ນລາວ.

ຊີວະປະຫວັດຫຍໍ້ຂອງ ທ່ານ ນາງ ມະນີວອນ ພົນອາມາດ

ຊື່ ແລະ ນາມສະກຸນ:	ທ່ານ ນາງ ມະນີວອນ ພົນອາມາດ
ວັນ/ເດືອນ/ປີເກີດ:	23/03/1980
ອາຍຸ:	42 ປີ
ທີ່ຢູ່ປັດຈຸບັນ:	ບ້ານ ສະພານທອງເໜືອ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	ປະລິນຍາໂທ ສາຂາ Public Administration, Flinders University, Australia
ດ້ານພາສາຕ່າງປະເທດ:	ພາສາອັງກິດ

ປະສົບການເຮັດວຽກ:

2004-2013	ວິຊາການສັງກັດຢູ່ພະແນກສັງລວມ, ພະແນກຄຸ້ມຄອງທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ ແລະ ພະແນກຄຸ້ມຄອງໜີ້ສິນ, ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ.
2013-2019	ຮອງໜ້າພະແນກສັງກັດຢູ່ພະແນກຄຸ້ມຄອງໜີ້ສິນ, ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ
2019-2020	ຫົວໜ້າພະແນກສັງກັດຢູ່ພະແນກຄຸ້ມຄອງໜີ້ສິນ, ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ
2021-ປັດຈຸບັນ	ຮອງຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ

ຊີວະປະຫວັດຫຍໍ້ຂອງ ທ່ານ ຊົນລະວິດ ວິນິດໄສ

ຊື່ ແລະ ນາມສະກຸນ:	ທ່ານ ຊົນລະວິດ ວິນິດໄສ
ວັນ/ເດືອນ/ປີເກີດ:	12/03/1978
ອາຍຸ:	44 ປີ
ທີ່ຢູ່ປັດຈຸບັນ:	ບ້ານ ໜອງດ້ວງເໜືອ, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	Master of Science (Banking and Finance), (English Program), Chulalongkorn University, Thailand Master of Engineering (Electrical Engineering), Chulalongkorn University, Thailand
ດ້ານພາສາຕ່າງປະເທດ:	ພາສາອັງກິດ ແລະ ພາສາໄທ

ປະສົບການເຮັດວຽກ:

2011-2015	RATCH Australia Corporation
2018-ປັດຈຸບັນ	Chief Executive officer, Fareast Renewable Development Pte. Ltd
2019-ປັດຈຸບັນ	Board of Director, Yandin WF Holding Pty Ltd., Yandin WF Pty Ltd and Asia Water Sole Co., Ltd
2021-ປັດຈຸບັນ	Board of Director, RATCH Lao Services Co., Ltd
	Board of Director, Siphandone – RATCH Lao Co., Ltd
	Board of Director, Bangkok Chain International (Laos) Co., Ltd
	Board of Director, Fareast Renewable Development Pte, Ltd
2022-ປັດຈຸບັນ	Board of Director, Hongsa Power Co., Ltd and Phufai Mining Company Limited
	Managing Director of Ratch-Lao Service Co., Ltd
	Managing Director of Asia Water Company Limited
	CEO of Foreast Renewable Development

ຊີວະປະຫວັດຫຍໍ້ຂອງ ທ່ານ ຄຳມູນ ວິພິງໄຊ

ຊື່ ແລະ ນາມສະກຸນ: ທ່ານ ຄຳມູນ ວິພິງໄຊ
ວັນ/ເດືອນ/ປີເກີດ: 13/02/1958
ອາຍຸ: 64 ປີ
ທີ່ຢູ່ປັດຈຸບັນ: ບ້ານ ໂພນສະຫວ່າງ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາ ກົດໝາຍ ແລະ ການບໍລິຫານພາກລັດ
ດ້ານພາສາຕ່າງປະເທດ: ພາສາອັງກິດ ແລະ ພາສາຣັງກາລີ

ປະສົບການເຮັດວຽກ:

1986-1990	ເປັນພະນັກງານຊ່ວຍວຽກຢູ່ກົມກົງຈັກ, ສຳນັກຄະນະຈັດຕັ້ງສູນກາງພັກ, ສຳນັກງານຄະນະຈັດຕັ້ງສູນກາງພັກ ຫຼັກ 6
1990-1992	ຮອງຫົວໜ້າກົມກົງຈັກ, ຄະນະຈັດຕັ້ງສູນກາງພັກ
1992-1996	ຫົວໜ້າກົມການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ສຳນັກງານນາຍົກລັດຖະມົນຕີ
1996-1998	ຜູ້ຮັກສາການຫົວໜ້າກົມການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ວ່າການເລຂາໜ່ວຍພັກກົມ.
2001-2005	ຫົວໜ້າກົມການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ເລຂາໜ່ວຍພັກ, ກົມການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ສຳນັກງານນາຍົກລັດຖະມົນຕີ
2006-2011	ຮອງຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ເປັນຄະນະພັກ ສັງກັດ ສຳນັກງານນາຍົກລັດຖະມົນຕີ
2011-2021	ຮອງລັດຖະມົນຕີ, ກະຊວງພາຍໃນ
2013-2021	ຄະນະກຳມະການຄຸ້ມຄອງຫຼັກຊັບ

ຊີວະປະຫວັດຫຍໍ້ຂອງ ທ່ານ ຄຳແກ້ວ ວິສີສົມບັດ

ຊື່ ແລະ ນາມສະກຸນ: ທ່ານ ຄຳແກ້ວ ວິສີສົມບັດ
ວັນ/ເດືອນ/ປີ/ເກີດ: 29/12/1975
ອາຍຸ: 47
ສັນຊາດ: ລາວ
ທີ່ຢູ່ປັດຈຸບັນ: ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ: - ປະລິນຍາໂທ ສາຂາ ເສດຖະສາດ, ປະເທດອິດສະຕາລີ.

ການເຝິກອົບຮົມ:

03-07/2016 ບຳລຸງທິດສະດີການເມືອງການປົກຄອງ ໄລຍະ 04 ເດືອນ ຢູ່ປະເທດ ສປ ຈີນ

ປະສົບການເຮັດວຽກ:

04/1998-2007 - ວິຊາການຢູ່ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ
2007-2009 - ຮອງຫົວໜ້າພະແນກສະຖິຕິ, ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ
2009-2010 - ຮັກສາການຫົວໜ້າພະແນກສະຖິຕິ, ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ
05/2010-2011 - ຫົວໜ້າພະແນກສະຖິຕິ, ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.
04-07/2011 - ເລຂາທ່ານ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ.
07/2011-2016 - ເລຂາທ່ານຜູ້ວ່າການ ທະນາຄານແຫ່ງ ສປປ ລາວ
06/2014-2016 - ຮອງຫົວໜ້າຫ້ອງການ, ທະນາຄານແຫ່ງ ສປປ ລາວ
07/2016-2017 - ຮອງຫົວໜ້າຄະນະກຳມະການຄຸ້ມຄອງຫຼັກຊັບ
02/2017-2019 - ຮອງຜູ້ອຳນວຍການໃຫຍ່ ທະນາຄານສົ່ງເສີມກະສິກຳ
2019-ປັດຈຸບັນ ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ
ກຳມະການສະພາບໍລິຫານອິດສະຫຼະ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

❖ ປັດຈຸບັນເປັນສະພາບໍລິຫານ 01 ບໍລິສັດຄື: 1) ກຳມະການສະພາບໍລິຫານກອງທຶນ SME ກະຊວງອຸດສາຫະກຳ ແລະ ການຄ້າ

ຊີວະປະຫວັດຫຍໍ້ຂອງ ທ່ານ ປອ. ພັນປະກິດ ອ່ອນພັນດາລາ

ຊື່ ແລະ ນາມສະກຸນ: ທ່ານ ປອ. ພັນປະກິດ ອ່ອນພັນດາລາ
ວັນ/ເດືອນ/ປີເກີດ: 22/08/1979
ອາຍຸ: 43 ປີ
ທີ່ຢູ່ປັດຈຸບັນ: ບ້ານ ຫ້ວຍຫົ່ງ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ: ປະລິນຍາເອກ ສາຂາ ເສດຖະສາດ
ດ້ານພາສາຕ່າງປະເທດ: ພາສາອັງກິດ, ພາສາຍີ່ປຸ່ນ ແລະ ພາສາໄທ

ປະສົບການເຮັດວຽກ:

2008-2011	ຜູ້ຊ່ວຍສາດສະດາຈານ, Graduate School of International Cooperation Studies, Kobe University, Japan
2011-2015	ຫົວໜ້າພະແນກການສຶກສາຫຼັງປະລິນຍາຕີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
2015-2019	ຮອງຜູ້ອຳນວຍການ ສະຖາບັນພັດທະນາຊັບພະຍາກອນມະນຸດລາວ-ຍີ່ປຸ່ນ, ມະຫາວິທະຍາໄລແຫ່ງຊາດ
2019-2020	ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍພັດທະນາວິສາຫະກິດ ແລະ ການເຊື່ອມໂຍງສາກົນ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ
2020-ປັດຈຸບັນ	ຮອງຫົວໜ້າກົມຄົ້ນຄວ້າສັງລວມ, ຫ້ອງວ່າການສູນກາງພັກ

ໃບມອບສັນທະ
PROXY

ຂຽນທີ່..... Written at

ວັນທີ..... ເດືອນ..... ປີ.....
Date Month Year

(1) ຂ້າພະເຈົ້າ..... ສັນຊາດ..... ວັນທີ, ເດືອນ ແລະ ປີເກີດ.....
I/We Nationality date, month and year of birth

ບັດປະຈຳຕົວເລກທີ..... ຢູ່ເຮືອນເລກທີ..... ບ້ານ..... ຖະໜົນ.....
ID card number Reside at Village Road

ເມືອງ..... ແຂວງ.....
District Province

(2) ເປັນຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
Being a shareholder of EDL-Generation Public Company.

ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ..... ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.
holding the ordinary shares in the total amount of shares, which are equivalent to the same number of votes.

(3) ຂໍມອບໝາຍໃຫ້
Hereby appoint

(1) ☐ ທ່ານ/ທ່ານນາງ..... ອາຍຸ..... ປີ,ຢູ່ເຮືອນເລກທີ.....
Mr./Ms. age years, reside at

ຖະໜົນ..... ບ້ານ..... ເມືອງ.....
Road Village District

ແຂວງ..... ລະຫັດໄປສະນີ..... ຫຼື
Province Postal Code or

(2) ☐ ທ່ານ ຄຳມຸນ ວິພົງໄຊ..... ອາຍຸ 64 ປີ, ຢູ່ເຮືອນເລກທີ 390
Mr. Khammoune VIPHONGXAY age 64 years, resides at 390

ຖະໜົນ..... ບ້ານ .....ໂພນສະຫວ່າງ... ເມືອງ ຈັນທະບູລີ
Road Village Phonsavang District Chanthabouly

ແຂວງ ນະຄອນຫຼວງວຽງຈັນ ລະຫັດໄປສະນີ 2392 ຫຼື
Province Postal Code 2392 or

(3) ☐ ທ່ານ ຄຳແກ້ວ ວິສີສົມບັດ..... ອາຍຸ 47 ປີ,ຢູ່ເຮືອນເລກທີ 015
Mr. Khamkeo VISISOMBATH age 47 years, resides at 015

ຖະໜົນ..... ບ້ານ.....ໂພນໄຊ ເມືອງ ໄຊເສດຖາ
Road Village Phonxay District Xaysetha

ແຂວງ.....ນະຄອນຫຼວງວຽງຈັນ ລະຫັດໄປສະນີ 2392 ຫຼື
Province Postal Code 2392 or

(4) ☐ ທ່ານ ປອ. ພັນປະກິດ ອ່ອນພັນດາລາ..... ອາຍຸ 43 ປີ, ຢູ່ເຮືອນເລກທີ.....593.....
Dr. Phanhpakit ONPHANHDALA age 43 years, resides at 593

ຖະໜົນ ..... ບ້ານ ..... ຫ້ວຍຫົ່ງ ..... ເມືອງ ຈັນທະບູລີ .....
Road Village Houyhong District Chanthabouly

ແຂວງ ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ 2392 .....
Vientiane Capital Postal Code 2392

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ໃນວັນທີ 27 ເມສາ 2022 ເວລາ 15:00 ໂມງ.

Any one of them to be my/our proxy to attend and vote on my/our behalf at the Annual General Meeting for the Year 2021 to be on 27 April 2022 at 3:00 pm.

ສະຖານທີ່ຫ້ອງປະຊຸມ ຊັ້ນທີ 1 ອາຄານສຳນັກງານ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງ ວຽງຈັນ ຫຼື ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

At meeting room, 1st floor, EDL Headquarter building, Lao-Thai Friendship Road, Thongkang Village, Sisattanak District, Vientiane Capital or any adjournment at any date, time and place thereof.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຄັ້ງນີ້ດັ່ງນີ້:

I/We hereby authorize the proxy to vote on my/our behalf at this meeting as follows:

☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;

To grant my/our proxy to consider and vote on my/our behalf as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າແລະມີສິດພິຈາລະນາແລະລົງມະຕິແທນຂ້າພະເຈົ້າໃນບາງວາລະ;

To grant my/our proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.

To grant my/our proxy to vote as per my/our intention

ວາລະທີ 1: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານຜູ້ໃໝ່ເພື່ອປ່ຽນແທນຜູ້ເກົ່າ ທີ່ຄົບອາຍຸການ, ຜູ້ທີ່ໄປຮັບໜ້າທີ່ໃໝ່ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຄືນໃໝ່.

Agenda No. 1 To consider and adopt the appointment of new Directors of the Board of Directors in replacement of directors whose term is completed and who was assigned to a new position and the re-appointment of directors.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020.

Agenda No. 2 To consider and adopt the Minutes of the Annual General Meeting of Shareholders for the year 2020

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 3: ພິຈາລະນາ ແລະ ອະນຸມັດເອົາລາຍງານການເງິນ 6 ເດືອນຕົ້ນປີ 2021 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2021 ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2021 ລວມທັງລາຍງານການເງິນຂອງບໍລິສັດ ປີ 2021, ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2022 ແລະ ວິໄສທັດ ແລະ ພາລະກິດ ຂອງບໍລິສັດ ສະບັບປັບປຸງ.

Agenda No. 3 To consider and approve the Company's financial statements for the first six-month period of 2021 and no dividend payment from the business performance of the first six-month period of 2021; the Company's business performance report including the Company's financial statements for the year 2021; the Company's 2022 business plan and the revised vision and mission of the company.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 4: ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2021, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີ່ຈ່າຍເງິນປັນຜົນ.

Agenda No. 4 To consider and approve the dividend payment from the Company's 2021 business performance, the determination of the closing date of shareholders register book to determine the right to receive the dividend, and the dividend payment date.

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 5. **ພິຈາລະນາ ແລະ ອະນຸມັດການຄັດເລືອກ ແລະ ການກຳນົດຄ່າຈ້າງຜູ້ກວດສອບພາຍນອກປີ 2023-2025.**

Agenda No. 5 **To Consider and approve the appointment of the company's external auditor and its remuneration for the years 2023-2025.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 6. **ພິຈາລະນາ ແລະ ອະນຸມັດການເພີ່ມຕົວຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານ ໃນສົກປີ 2022.**

Agenda No. 6 **To Consider and approve the increase of index multiplier of the basic salary of the Company's employees for the fiscal year 2022.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 7: **ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.**

Agenda No. 7 **To consider and adopt the amendments to the Articles of Association of the Company in Article 9: Directors and Article 12: Board of Directors.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າ ໃນຖານະຜູ້ຖືຮຸ້ນ.

Voting of the proxy in any agenda that is not as specified in this Proxy shall be considered as invalid and shall not be my/our voting as a shareholder.

(6) ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະປະຊຸມໃດໄວ້ ຫຼື ລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າເຫັນດີ.

In case I/we have not specified my/our voting intention in any agenda or not clearly specified, it shall be deemed approved.

ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງ ຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກຢ່າງ.

Any business carried out by the proxy at the said meeting, except in case that the proxy does not vote according to my/our intention(s) specified in the Proxy, shall be deemed as having been carried out by myself/ourselves in all respects.

ລົງລາຍເຊັ້ນ/Signed ຜູ້ຖືຮຸ້ນທີ່ມອບໝາຍ/Grantor

(.....)

ລົງລາຍເຊັ້ນ/Signed ຜູ້ຕາງໜ້າ/Proxy

(.....)

ໝາຍເຫດ

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງຜູ້ດຽວເປັນຜູ້ເຂົ້າຮ່ວມປະຊຸມແລະລົງຄະແນນສຽງ, ແລະບໍ່ສາມາດແບ່ງແຍກຈຳ ນວນຮຸ້ນ ໃຫ້ຜູ້ຕາງໜ້າຫຼາຍຄົນເພື່ອແຍກການລົງຄະແນນສຽງໄດ້.

   The shareholder appointing the proxy must authorize only one proxy to attend and vote at the meeting and may not split the number of shares to several proxies for splitting votes.

2. ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009, ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍແລະຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ, ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆໃນກໍລະນີທີ່ໃບມອບສັນທະສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

   Pursuant to the Law on Notary (Amended) No. 11/NA, dated 26 November 2009, in order for the appointment by the shareholder to the proxy to have legal effect, this Proxy must be registered with the court. In this regard, the Company will not take any responsibility in the case where the Proxy submitted to the Company has not been registered with the court.

ເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2021 ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນຈັດຂຶ້ນເປັນ 2 ລະບົບ ຄື: ຜູ້ຖືຮຸ້ນສາມາດເຂົ້າຮ່ວມຜ່ານລະບົບອອນລາຍ ຜ່ານລະບົບ AGM: https://agm-egm.edlgen.com.la/user/login ແລະ ສາມາດເຂົ້າຮ່ວມແບບຊ້ອງໜ້າ ທີ່ຫ້ອງປະຊຸມຊັ້ນ 1 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ. ເຊິ່ງຜູ້ຖືຮຸ້ນຕ້ອງປະຕິບັດຕາມແຕ່ລະກໍລະນີດັ່ງລຸ່ມນີ້:

- ຊື່ອີເມວ ຂອງບໍລິສັດ ຜ-ຟຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la.

I. <u>ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມຜ່ານລະບົບອອນລາຍ AGM</u>

ຜູ້ຖືຮຸ້ນ ທີ່ຈະມາເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍໄດ້ ແມ່ນຜູ້ທີ່ໄດ້ຮັບການຕອບຮັບຢືນຢັນການເຂົ້າຮ່ວມຈາກບໍລິສັດເທົ່ານັ້ນ ເຊິ່ງຕ້ອງແຈ້ງຈຸດປະສົງເຂົ້າຮ່ວມປະຊຸມທາງອອນລາຍຜ່ານລະບົບ AGM ທີ່ບໍລິສັດໄດ້ແຈ້ງລາຍລະອຽດຜ່ານອີເມວ, ເລີ່ມລົງທະບຽນປະຊຸມທາງອອນລາຍເລີ່ມແຕ່ວັນທີ່ແຈ້ງອີເມວ ແລະ ບໍ່ເກີນວັນທີ 25 ເມສາ 2022.

1. **ເອກະສານທີ່ຕ້ອງກະກຽມໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ AGM ໃນແຕ່ລະຮູບແບບ ມີດັ່ງນີ້:**
   1) ສຳລັບຜູ້ຖືຮຸ້ນທີ່ມາດ້ວຍຕົນເອງ ທີ່ມີຈຸດປະສົງແຈ້ງເຂົ້າປະຊຸມແບບຊ້ອງໜ້າ, ໃນກໍລະນີນີ້ ຜູ້ຖືຮຸ້ນບໍ່ຈຳເປັນຕ້ອງນຳສິ່ງເອກະສານ ອີເລັກໂທຣນິກໃດໆ ເຂົ້າສູ່ລະບົບ AGM.
   2) ສຳລັບຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງໜ້າ:
      2.1. ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ ເທົ່ານັ້ນ).
      2.2. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.
      - ການເຂົ້າຮ່ວມກອງປະຊຸມຂອງຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງໜ້າລັກສະນະ 2.1 ແລະ 2.2 ຜູ້ຖືຮຸ້ນຈະຕ້ອງທຳການສະແກນເອກະສານບັດປະຈຳຕົວ /ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ຂອງຜູ້ຖືຮຸ້ນເອງ ເພື່ອຢືນຢັນຕົວຕົນ, ເອກະສານໃບມອບສັນທະ, ເອກະສານສຳຄັນຕ່າງໆ ໂດຍເອກະສານທັງໝົດຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ) ເພື່ອນຳເຂົ້າສູ່ລະບົບ AGM ເພື່ອໃຫ້ເຈົ້າໜ້າທີ່ທຳການລົງຄະແນນສຽງໃຫ້ສຳເລັດ.
      - ນອກຈາກນີ້ຜູ້ຖືຮຸ້ນຈະຕ້ອງລົງທະບຽນໃຫ້ຜູ້ຕາງໜ້າ (ຜູ້ຕາງໜ້າທົ່ວໄປທີ່ບໍ່ແມ່ນກຳມະການ ອິດສະຫຼະ) ໂດຍທຳການອັບໂຫຼດເອກະສານບັດປະຈຳຕົວ/ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ຂອງຜູ້ຕາງໜ້າ ເພື່ອຢືນຢັນຕົວຕົນ. ໂດຍຕ້ອງເປັນຟາຍ ນາມສະກຸນ JPG, JPEG ເພື່ອນຳເຂົ້າສູ່ລະບົບ AGM ເພື່ອໃຫ້ເຈົ້າໜ້າທີ່ທຳການລົງຄະແນນສຽງໃຫ້ສຳເລັດ.

   3) ສຳລັບຜູ້ຖືຮຸ້ນເຂົ້າຮ່ວມແບບອອນລາຍດ້ວຍຕົນເອງຈະຕ້ອງໄດ້ ອັບໂຫລດເອກະສານບັດປະຈຳຕົວ /ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ເປັນຟາຍນາມສະກຸນ JPG, JPEG ເພື່ອນຳເຂົ້າສູ່ລະບົບ AGM ເພື່ອຢືນຢັນຕົວຕົນເທົ່ານັ້ນ, ສຳລັບກໍລະນີນີ້ຜູ້ຖືຮຸ້ນສາມາດລົງຄະແນນສຽງແບບອອນລາຍໄດ້.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມທາງອອນລາຍໄດ້. ເຊິ່ງເອກະສານທີ່ຕ້ອງ ຄັດຕິດສົ່ງເຂົ້າມາໃນລະບົບມີດັ່ງນີ້:</u>

1. ການລົງທະບຽນ ເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ AGM.

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທາງອອນລາຍ ນັບແຕ່ມື້ສົ່ງແຈ້ງເຊີນຜ່ານອີເມວຂອງຜູ້ຖືຮຸ້ນ ເຖິງວັນທີ 25/04/2022 ໂດຍຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມທາງອອນລາຍຕ້ອງແຈ້ງຈຸດປະສົງເຂົ້າຮ່ວມ ຜ່ານລະບົບ AGM ຄື: https://agm-egm.edlgen.com.la/user/login, ລາຍລະອຽດຕ່າງໆແມ່ນແນບຜ່ານອີເມວ ເຊິ່ງຜູ້ຖືຮຸ້ນຈະໄດ້ຮັບຂໍ້ມູນດັ່ງນີ້:

1) ລິ້ງທີ່ຢູ່ເວັບໄຊສຳລັບການເຂົ້າສູ່ລະບົບ AGM ເພື່ອລົງທະບຽນ ແລະ ລົງຄະແນນສຽງ.
2) ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສຳລັບເຂົ້າສູ່ລະບົບ AGM.

   ພາຍຫຼັງ ກົດລິ້ງ https://agm-egm.edlgen.com.la/user/login ເຂົ້າສູ່ລະບົບຄັ້ງທຳອິດ ຜູ້ຖືຮຸ້ນຈຳເປັນຕ້ອງໄດ້ກົດ "ລືມລະຫັດຜ່ານ" ເພື່ອດຳເນີນຕັ້ງຄ່າ ລະຫັດຜ່ານໃຫມ່ ໂດຍທີ່ ລະບົບຈະສົ່ງຂໍ້ຄວາມໄປທີ່ອີເມວ ຂອງທ່ານທັນທີ.
3) ເມື່ອເຂົ້າສູ່ລະບົບ ການຕອບຮັບເຂົ້າຮ່ວມປະຊຸມ ຈະມີ 3 ທາງເລືອກເຊັ່ນ:
   3.1. "ຕ້ອງການເຂົ້າຮ່ວມປະຊຸມ ມາດ້ວຍຕົນເອງ (Individual)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແຕ່ເຂົ້າຮ່ວມງານປະຊຸມຊ້ອງໜ້າ.
   3.2. "ຕ້ອງການເຂົ້າຮ່ວມກອງປະຊຸມ ໂດຍການມອບສັນທະ (Proxy)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ມອບສັນທະ, ເຊິ່ງມີລາຍລະອຽດດັ່ງນີ້:
   - ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ ເທົ່ານັ້ນ).
   - ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.

   3.3. "ຕ້ອງການເຂົ້າຮ່ວມປະຊຸມ ດ້ວຍຕົນເອງ ແບບອອນລາຍ" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ເຂົ້າຮ່ວມງານປະຊຸມຜ່ານທາງ Microsoft Team ແລະ ໂຫວດຄະແນນສຽງຜ່ານລະບົບ AGM.

2. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຈະຕ້ອງສຳເນົາ ເພື່ອນຳເຂົ້າລະບົບ AGM ເພື່ອໃຊ້ໃນການຢັ້ງຢືນຕົວຕົນ ໃນການເຂົ້າຮ່ວມກອງປະຊຸມອອນລາຍ

- ເອກະສານທີ່ໃຊ້ເພື່ອຢັ້ງຢືນຕົວຕົນເຊັ່ນ: ບັດປະຈຳຕົວ, ບັດໜັງສືຜ່ານແດນ(ສຳລັບຄົນຕ່າງປະເທດ) ແລະ ເອກະສານອື່ນໆທີ່ກ່ຽວກັບເອກະສານຢັ້ງຢືນຕົວຕົນ ຕ້ອງເປັນຟາຍຮູບພາບ ນາມສະກຸນ JPG ຫຼື JPEG.
- ເອກະສານໃບມອບສັນທະ ແລະ ເອກະສານສຳຄັນຕ່າງໆ ຕ້ອງເປັນຟາຍນາມສະກຸນ PDF.

2.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

2.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມອອນລາຍດ້ວຍຕົນເອງ

(1) ໃຫ້ສຳເນົາເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ, ໃນກໍລະນີດັ່ງກ່າວ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ອີເມວກໍ່ໄດ້.

2.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ສຳເນົາເອກະສານ ດັ່ງລຸ່ມນີ້ :

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ. ຕົວແທນຕ້ອງສຳເນົາເອກະສານໃນຮູບແບບຟາຍ PDF.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 2.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍໃນຮູບແບບຟາຍ PDF.

- **ເອກະສານ 2 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ສຳເນົາເອກະສານໃນຮູບແບບນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(4) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2 ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ

2.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ອັບໂຫລດເອກະສານໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ),ໃຫ້ສຳເນົາເອກະສານ ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ເຂົ້າສູ່ລະບົບ AGM ເພື່ອຢືນຢັນຕົວຕົນ.

(3) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ ໃຫ້ສຳເນົາເອກະສານເປັນຟາຍດຽວ ເພື່ອສົ່ງເອກະສານ ໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ AGM.

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ AGM ເພື່ອຢືນຢັນຕົວຕົນ.

(3) ສະແກນເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້ 2.2.1 (1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF).

- **ເອກະສານ 3 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ອັບໂຫຼດເອກະສານໃນຮູບແບບນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(5) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 2.2.1 ຫຼື 2.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

3. ການມອບໝາຍເອກະສານ.

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

3.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ການເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

- ໃຫ້ສະແກນເອກະສານ ໃບມອບສັນທະ ໃນຮູບແບບຟາຍ (PDF) ເພື່ອສົ່ງເຂົ້າລະບົບ AGM ກ່ອນວັນທີ 25 ເມສາ 2022 ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

4. ການແຈ້ງຕອບ ຈາກລະບົບ AGM ແລະ ຮັບລົ້ງປະຊຸມອອນລາຍຜ່ານ Microsoft Team.

- ກໍລະນີ ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງ ຜົນສະຖານະ ແລະ ແຈ້ງລົ້ງເຂົ້າຮ່ວມປະຊຸມຜ່ານ Microsoft Team ໃນລະບົບບັນຊີຜູ້ໃຊ້ງານ AGM.

- ກໍລະນີ ບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງຜ່ານອີເມວຂອງຜູ້ຖືຮຸ້ນ ແລະ/ຫຼື ອີເມວຂອງຜູ້ຕາງໜ້າ.
- ອີເມວເຈົ້າໜ້າທີ່ລົງທະບຽນຈະສົ່ງຫາຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງດຳເນີນການດ້ານເອກະສານໃຫ້ສຳເລັດ ຕາມໄລຍະເວລາທີ່ກຳນົດ, ອີເມວສຳລັບການແຈ້ງກໍລະນີເອກະສານບໍ່ຜ່ານການອະນຸມັດ ຊື່ທີ່ຢູ່ອີເມວ: proxy-register@edlgen.com.la

5. ການລົງຄະແນນສຽງໃນກອງປະຊຸມສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ AGM.

5.1 ຫຼັກການລົງຄະແນນສຽງ

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ເມື່ອຜູ້ຖືຮຸ້ນເຂົ້າສູ່ລະບົບເພື່ອລົງຄະແນນສຽງ ພາຍໃນລະບົບ ຈະມີ 2 ທາງເລືອກ ເພື່ອກົດລົງຄະແນນສຽງ ເຫັນດີ ຫຼື ບໍ່ເຫັນດີ, ຜູ້ຖືຮຸ້ນຈະເຫັນ ແລະ ສາມາດກົດເຂົ້າສູ່ວາລະ ເພື່ອລົງຄະແນນສຽງໄດ້ ກໍຕໍ່ເມື່ອ ວາລະນັ້ນເປີດໃຫ້ລົງຄະແນນສຽງຢູ່.

5.2 ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມຜ່ານທາງອອນລາຍ

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼື ບໍ່, ກຳນົດເວລາບໍ່ເກີນ 2 ນາທີ ໃນການລົງຄະແນນສຽງ, ຜູ້ທີ່ເຫັນດີຕ້ອງກົດເລືອກ ເຫັນດີ 

ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ກົດເລືອກ ບໍ່ເຫັນດີ 

ໃນໜ້າຕ່າງການລົງຄະແນນ ເພື່ອລະບົບຈະນຳໄປກວດນັບສະຫຼຸບຄະແນນສຽງ,

ຍົກເວັ້ນ: ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ແລະ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ) ຈະບໍ່ສາມາດລົງຄະແນນສຽງແບບອອນລາຍໄດ້, ເນື່ອງຈາກ ເຈົ້າໜ້າທີ່ຮັບຜິດຊອບລົງຄະແນນສຽງ ໄດ້ທຳການລົງຄະແນນສຽງ ແລະ ບັນທຶກຄະແນນສຽງດັ່ງກ່າວຕາມທີ່ຕົວແທນໄດ້ນຳສົ່ງຝ່າຍເອກະສານມອບສັນທະ ເຂົ້າສູ່ລະບົບ AGM ກ່ອນໜ້ານີ້ແລ້ວ.

5.3 ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນສຽງ.

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມ, ບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດໃນແຕ່ລະວາລະ, ຜູ້ຖືຮຸ້ນສາມາດຮັບຊົມການສະຫຼຸບ ແລະ ແຈ້ງຄະແນນສຽງຜ່ານກອງປະຊຸມອອນລາຍ ຜ່ານໂປຣແກຼມ Microsoft Teams.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

II. <u>ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບຊ້ອງໜ້າ</u>

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ, ໃບແຈ້ງສິດ ແລະ ໃບມອບສັນທະມາພ້ອມ.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.</u>

1. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງໃຊ້ໃນການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ

1.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

1.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ
ໃຫ້ສະແດງເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 1.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ.

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 <u>ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ</u>

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(3) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້1.2.1(1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳ ລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື 1.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

2.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

2.2 ນຳສົ່ງໃບມອບສັນທະຄືນ ພະແນກເລຂານຸການບໍລິສັດ ກ່ອນວັນທີ **27 ເມສາ 2022** ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍໜຶ່ງຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ້ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ກ່ອນເປີດກອງປະຊຸມ 01 ຊົ່ວໂມງ 30 ນາທີ ຫຼື ຕັ້ງແຕ່ເວລາ 13:30-15:00 ໂມງ ເປັນຕົ້ນໄປ ໃນວັນທີ **27 ເມສາ 2022** ທີ່ຫ້ອງປະຊຸມຊັ້ນ 1 ອາຄານສຳນັກງານລັດວິສາຫະກິດໄຟຟ້າລາວ ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ ຕາມແຜນທີ່ຄັດຕິດມາພ້ອມນີ້.

ໃນນີ້, ໃນແຕ່ລະວາລະປະຊຸມ ກ່ອນເລີ້ມການລົງຄະແນນ ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດ.

4. ການລົງຄະແນນສຽງໃນກອງປະຊຸມສາມັນຜູ້ຖືຮຸ້ນ

4.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳຫຼັບທຸກໆ ວາລະປະຊຸມ ທີ່ຕ້ອງມີການລົງຄະແນນສຽງ ໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນ ໃນເວລາທີ່ລົງທະບຽນ, **ຍົກເວັ້ນ** ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມ ໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະ ແນນສະເພາະວາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ</u>

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼືບໍ່ ຜູ້ທີ່ເຫັນດີບໍ່ຕ້ອງກາເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນ ເພື່ອສົ່ງມອບໃຫ້ແກ່ເຈົ້າໜ້າທີ່ຂອງບໍລິສັດ ເພື່ອນຳໄປກວດນັບ, <u>ຍົກເວັ້ນ</u> ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຊາບຜົນການລົງຄະແນນສຽງ ໃນແຕ່ລະວາລະປະຊຸມສິ້ນສຸດລົງແລ້ວ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມາລວມ ເປັນຄະແນນສຽງອີກ.

4.3 <u>ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ</u>

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມ ໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

ຂັ້ນຕອນເຂົ້າລະບົບກອງປະຊຸມສາມັນຜູ້ຖືຮຸ້ນ ຜ-ຟຟລ ປະຈຳປີ 2021 ຜ່ານລະບົບອອນລາຍ

ຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າປະຊຸມຜ່ານລະບົບອອນລາຍ ສາມາດປະຕິບັດຕາມຂັ້ນຕອນດັ່ງນີ້:

1. ບໍລິສັດ ຈະສົ່ງ E-mail ແຈ້ງເຊີນປະຊຸມ ແລະ ລາຍລະອຽດການເຂົ້າຮ່ວມປະຊຸມ ໄປຫາຜູ້ຖືຮຸ້ນປະກອບມີ:
   1) ລິ້ງສຳລັບເຂົ້າສູ່ລະບົບ AGM ເພື່ອລົງທະບຽນກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງຜ່ານອອນລາຍ.
   2) ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສຳລັບ ເຂົ້າສູ່ລະບົບ AGM.
   3) File ບັດເຊີນທີ່ຄັດຕິດເພື່ອເປັນຂໍ້ມູນ.
      - ຊື່ອີເມວ ຂອງບໍລິສັດ ຜ-ຟຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la.

2. ສຳລັບຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍ ລະບົບລົງທະບຽນອອນລາຍ ຈະເປີດໃຫ້ດຳເນີນການ **ຕັ້ງແຕ່ວັນທີຜູ້ຖືຮຸ້ນໄດ້ຮັບບັດເຊີນ ໂດຍລະບົບຈະປິດຮັບ ການລົງທະບຽນອອນລາຍ ໃນວັນທີ 25/04/2022 ເວລາ 17:00 ໂມງ.**
3. ທ່ານສາມາດ ສະແກນ QR Code ແລະ ນຳໃຊ້ Short link ເພື່ອດາວໂຫລດຄູ່ມືການຕິດຕັ້ງ ໂປຣແກຣມ Microsoft Team ແລະ ຂັ້ນຕອນການໃຊ້ງານລະບົບ ກອງປະຊຸມສາມັນຜູ້ຖືຮຸ້ນ ຜ-ຟຟລ ປະຈຳປີ 2021 ຜ່ານລະບົບອອນລາຍ AGM ເພື່ອສຶກສາກ່ຽວກັບລະບົບ ແລະ ປະຕິບັດຕາມແຕ່ລະຂັ້ນຕອນ.

https://cutt.ly/VFvnxRX

ໝາຍເຫດ:

1. ຜູ້ຖືຮຸ້ນຕ້ອງນຳເອົາ ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ທີ່ໄດ້ຮັບຈາກ E-mail ເພື່ອໃຊ້ເປັນ ຊື່ຜູ້ໃຊ້ງານ ເຂົ້າສູ່ລະບົບ AGM, ເພື່ອແຈ້ງຈຸດປະສົງການເຂົ້າຮ່ວມຜ່ານອອນລາຍ, ເມື່ອເອກະສານຢັ້ງຢືນຕົວຕົນ ແລະ ເອກະສານສຳຄັນຕ່າງໆຂອງຜູ້ຖືຮຸ້ນ ຜ່ານການອະນຸມັດໃນຂັ້ນຕອນນີ້ຈະນັບເປັນອົງປະຊຸມໃຫ້ (ຖ້າຫາກຜູ້ຖືຮຸ້ນບໍ່ດຳເນີນການລົງທະບຽນ/ຢືນຢັນຕົວຕົນໃຫ້ສຳເລັດ, ກໍລະນີທີ່ເອກະສານບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ ການເຂົ້າຮ່ວມກອງປະຊຸມ ລະບົບຈະບໍ່ນັບເປັນອົງປະຊຸມ ແລະ

ບໍ່ສາມາດໂຫວດຄະແນນຜ່ານອອນລາຍໄດ້ ລວມເຖິງຈະບໍ່ສາມາດຮັບຊົມການຖ່າຍທອດສົດຂອງກອງປະຊຸມ ໄດ້), ກໍລະນີເຂົ້າຮ່ວມໂຫວດອອນລາຍ ຖ້າຫາກຜູ້ຖືຮຸ້ນກົດປຸ່ມ “ອອກຈາກການປະຊຸມ ຫຼື ອອກຈາກລະບົບ ໂຫວດຄະແນນສຽງ” ລະຫວ່າງການດຳເນີນກອງປະຊຸມ ລະບົບຈະຕັດຄະແນນສຽງ ອອກຈາກອົງປະຊຸມ.

2. ຜູ້ຖືຮຸ້ນຕ້ອງມີ E-mail ເພື່ອຮັບຂໍ້ມູນແຈ້ງເຊີນເຂົ້າຮ່ວມລົງທະບຽນກອງປະຊຸມສາມັນຜູ້ຖືຮຸ້ນ ຜ-ຟຟລ ປະຈຳ ປີ 2021 ຜ່ານລະບົບອອນລາຍ.
3. ຂໍ້ມູນທີ່ປະກອບໃນລະບົບຕ້ອງກົງກັບຂໍ້ມູນ ໃນວັນ Record Date ຈາກຕະຫຼາດຫຼັກຊັບລາວ.
4. ກໍລະນີພົບບັນຫາໃນການໃຊ້ງານລະບົບປະຊຸມຜູ້ຖືຮຸ້ນຜ່ານລະບົບອອນລາຍ ຂອງ ຜ-ຟຟລ ສາມາດຕິດຕໍ່ໄດ້ທີ່ ເບີ ໂທ: 020 2221 0404, 020 5884 8144 (ໃຫ້ບໍລິການຈົນເຖິງ ວັນທີ 27 ເມສາ 2022 ເວລາ 8:30 - 17:00 ໂມງ).

ແຜນທີ່ ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021

Map of the Meeting Place



ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021

ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.

The Annual General Shareholder meeting for the year 2021, on 1st floor, Electricite du Laos heardquarter building.